ສະບັບທີ 01, ຊຸດທີ 01 (2026); 22- 36

ວາລະສານວິທະຍາສາດການເມືອງ-ການປົກຄອງ

www.jnappa.lci.la; ISSN: 3107-1163; E-ISSN: 3107-1171

DOI: https://doi.org/10.71026/jnappa.2026.010103



ການພັດທະນາລັດຖະບານເອເລັກໂຕຼນິກ ໃນເງື່ອນໄຂວິທະຍາສາດ ແລະ ເຕັກໂນໂລຊີ ຂະຫຍາຍຕົວ

E-government Development in the Condition of Rapid Advancement in Science and Technology

ໂພທອງ ໄຊທິບວົງສາ; ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ,

Email: p.vongsa9996@gmail.com

ປະຫວັດຫົວຂໍ້ຄົ້ນຄວ້າ

ໄດ້ຮັບ: 30 ພຶດສະພາ 2025

ໄດ້ຮັບພາຍຫຼັງປັບປຸງ: 15 ກັນຍາ 2025

ຖືກຮັບຮອງ: 30 ຕຸລາ 2025

ຈັດພິມອອນລາຍ: 03 ມີນາ 2026

ບົດຄັດຫຍໍ້:

ໃນຍຸກທີ່ເຕັກໂນໂລຊີ ແລະ ວິທະຍາສາດ ມີບົດບາດສຳຄັນເປັນແກ່ນກາງ ໃນການຂັບເຄື່ອນຂະບວນການພັດທະນາເສດຖະກິດ - ສັງຄົມ ຂອງມະນຸດ, ເຕັກນິກວິທະຍາສາດ ແລະ ເຄື່ອງມືເຕັກໂນໂລຊີທັນສະໄໝ ທີ່ຫລາກຫລາຍ ໄດ້ຖືກນຳໃຊ້ເຂົ້າໃນຫລາຍຂົງເຂດ. ໜຶ່ງໃນປາກົດການໃໝ່ສຳຄັນທີ່ເກີດຂຶ້ນເນື່ອງຈາກການເຕີບ ໃຫຍ່ຂະຫຍາຍຕົວ ແລະ ການນຳໃຊ້ຜົນສຳເລັດຂອງວິທະຍາສາດ ແລະ ເຕັກໂນໂລຊີຢ່າງແຜ່ຫລາຍນັ້ນ ກໍ່ຄືຂະແໜງການບໍລິຫານລັດ ຫລືເອີ້ນວ່າ ການບໍລິຫານລັດເອເລັກໂຕຼນິກ. ການບໍລິຫານລັດດ້ວຍເອເລັກໂຕຼນິກ ໝາຍເຖິງນຳໃຊ້ຂໍ້ມູນຂ່າວສານເຕັກໂນໂລຊີ, ນະວັດຕະກຳວິທະຍາສາດ ແລະ ລະບົບເຄືອຂ່າຍອິນເຕີເນັດ ເຂົ້າຊ່ວຍໃນການປັບປຸງການບໍລິການຂອງລັດ ໃຫ້ກັບພົນລະເມືອງ, ຫົວໜ່ວຍທຸລະກິດ ແລະ ອົງການຈັດຕັ້ງອື່ນໆ ຢ່າງມີປະສິດທິພາບ ໂດຍແນ່ໃສ່ໃຫ້ເພີ່ມປະສິດທິພາບ, ຄວາມ ໂປ່ງໃສ ແລະ ການມີສ່ວນຮ່ວມ ຂອງພົນລະເມືອງ ໃນການບໍລິຫານລັດ. ໃນໄລຍະຜ່ານມາ, ພັກ - ລັດຖະບານ ໄດ້ມີແນວທາງທີ່ຊັດເຈນ ໃນການພັດທະນາການຄຸ້ມ ຄອງບໍລິຫານລັດທີ່ທັນສະໄໝ ເປັນຕົ້ນແມ່ນການພັດທະນາລັດຖະບານເອເລັກໂຕຼນິກ ແລະ ລັດຖະບານດິຈິຕອນ ໃນແຕ່ລະໄລຍະ ເຊິ່ງສາມາດສ້າງໄດ້ຜົນງານທີ່ພົ້ນເດັ່ນຈຳນວນໜຶ່ງ ເປັນຕົ້ນແມ່ນລັດຖະບານໄດ້ສ້າງພື້ນຖານ ທາງດ້ານນິຕິກຳການບໍລິຫານລັດດ້ວຍເອເລັກໂຕຼນິກ, ການພັດທະນາ ແລະ ປັບປຸງພື້ນຖານໂຄງລ່າງການບໍລິຫານລັດ ດ້ວຍເອເລັກໂຕຼນິກ, ການໃຫ້ບໍລິການອອນລາຍ ໃນລະບົບການບໍລິຫານລັດດ້ວຍເອເລັກໂຕຼນິກ, ການສ້າງຄວາມອາດສາມາດ

ຂອງປະຊາຊົນ ໃນການກ້າວເຂົ້າສູ່ການບໍລິ ຫານລັດດ້ວຍເອ ເລັກໂຕຼນິກ. ບົນພື້ນຖານ ຂອງຄວາມສຳເລັດດັ່ງກ່າວນັ້ນ ກໍ່ຍັງ ເຫັນໄດ້ບັນຫາຕົ້ນຕໍຈຳນວນໜຶ່ງ ທີ່ຕ້ອງໄດ້ຮັບການແກ້ໄຂຢ່າງ ທັນການ ເຊັ່ນ: ດ້ານໂຄງລ່າງພື້ນຖານ, ຄວາມອາດສາມາດດ້ານ ບຸກຄະລາກອນ, ລະດັບຄວາມປອດໄພໃນການໃຫ້ບໍລິການ ອອນລາຍ ຂອງພາກລັດ ແລະບັນຫາອື່ນໆ. ແຕ່ບັນຫາເຫລົ່ານັ້ນ ກໍ່ບໍ່ໄດ້ເດັດຖານ ແລະ ສາມາດແກ້ໄຂໄດ້ ໃນການພັດທະນາ ລັດຖະບານເອເລັກໂຕຼນິກ ຈຳ ເປັນຕ້ອງເລີ່ມຈາກການສ້າງສີໄສ ທັດ ທີ່ຖືກຕ້ອງສອດຄ່ອງກັບແນວທາງການທັນເປັນທັນສະໄໝ ໃນການຄຸ້ມຄອງບໍລິການລັດແບບໃໝ່; ສັ່ງລວມກຳລັງແຮງ ພາຍໃນ ແລະພາຍນອກ ເຂົ້າໃນການປັບປຸງ, ຍົກລະດັບດ້ານຂີດ ຄວາມສາມາດ ພື້ນຖານໂຄງລ່າງທີ່ເປັນໜາກຫົວໃຈຫລັກ ຂອງ ລັດຖະບານເອເລັກໂຕຼນິກ, ສ້າງແບບແຜນຍຸດທະສາດ ການ ບຳລຸງ - ກໍ່ສ້າງບຸກຄະລະກອນ ແລະ ພົນລະເມືອງດີຈິຕອນທີ່ ທັນສະໄໝ ໃຫ້ເລິກ ເຊິ່ງ, ໜັກແໜ້ນ, ຍາວນານ ແລະ ຍົກ ລະດັບ ມາດຕະຖານຄວາມປອດໄພ ໃນການບໍລິຫານລັດເອ ເລັກໂຕຼນິກ ໃຫ້ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນໄດ້.

ຄຳສັບສຳຄັນ: ການບໍລິຫານລັດ, ລັດຖະບານເອເລັກໂຕຼນິກ, ວິທະຍາສາດ, ເຕັກໂນໂລຊີ

Abstract:

In the condition which technology and science play a crucial role in driving the socio-economic development, a wide variety of scientific techniques and modern technological tools have been used in many fields. One of the important new phenomena that has emerged due to the growth and widespread use of the achievements of science and technology is the field of public administration, or so-called e-government. E-government refers to the use of information technology, scientific innovation and Internet systems to improve the public services for citizens, business entities and other organizations effectively, aiming to increase efficiency, transparency and citizen participation in public administration and governance. Previously, the Revolutionary Party and Government of Lao PDR have had a clear direction in developing and modernizing the its public administration such as the development of e-government and digital government in each period, which has been able to achieve a number of outstanding outcomes. For instance, the government has established a strong legal basis for e-government development, developed and improved the infrastructure of e-government, provided online services in the e-government system, and built the capacity of the population to transition to e-government; on the basis of such achievements, there are still a number of main problems that need to be resolved in a timely manner, such as infrastructure, personnel capacity, security level in providing online government administration services, and other relating issues. However, those problems are not decisive and can be resolved. In the development of e-government, it is necessary to start from creating a vision that is consistent with the direction of modernization in new public administration; Both internal and external forces are comprehensively used to improve and upgrade the infrastructure capabilities that are the heart of e-government development, Establishing a strategic plan for nurturing and building digital personnel and citizens and upgrading security standards in e-government administration to be able to integrate with the regional and international countries.

Key words: Governance, E-government, Technology, Science

I. ຄວາມໝາຍ, ບົດບາດ ແລະ ຄວາມສຳຄັນ ຂອງການບໍລິຫານລັດເອເລັກໂຕຼນິກ.

1. ຄວາມໝາຍການບໍລິຫານລັດ ເອເລັກໂຕຼນິກ.

ການບໍລິຫານລັດເອເລັກໂຕຼນິກ ໄດ້ປາກົດຂຶ້ນຢ່າງຊັດ ເຈນ ໃນທ້າຍຊຸມປີ 1990 ເຊິ່ງເປັນໄລຍະທີ່ຫລາຍປະເທດ ໄດ້ ມີການນຳໃຊ້ລະບົບເຄືອຂ່າຍອິນເຕີເນັດຢ່າງກວ້າງຂວາງ ແລະມີ ບາງປະເທດ ໄດ້ເລີ່ມໝູນໃຊ້ຜົນປະໂຫຍດ ແລະ ສັກກາຍະພາບ

ຂອງອິນເຕີເນັດເຂົ້າໃນວຽກງານການບໍລິການ ແລະ ການບໍລິຫານຂອງລັດ. ພ້ອມນັ້ນ ເລີ່ມມີຫລາຍຂະບວນການຄົ້ນຄວ້າວິທະຍາສາດ ໃຫ້ຄວາມສົນໃຈໃນການສຶກສາຄົ້ນ ຄວ້າ ກ່ຽວກັບການບໍລິຫານລັດເອເລັກໂຕນິກ ທີ່ໄດ້ຈັດຂຶ້ນຢູ່ທະວີບເອີຣົບ ແລະ ທະວີບອາເມຣິກາເໜືອ ເປັນຕົ້ນແມ່ນ ກອງປະຊຸມສຳມະນາວິທະຍາສາດ European DEXA E-GOV, US Digital Government, European Conference on e-Government ແລະ ກອງປະຊຸມສາມະນາວິທະຍາສາດ ກ່ຽວກັບການບໍລິຫານລັດເອ ເລັກໂຕນິກ ກໍ່ໄດ້ຮັບຄວາມສົນໃຈໃນທົ່ວໂລກ ເຊິ່ງສະ ແດງອອກໄດ້ມີບັນດາຫົວຂໍ້ບົດວິທະຍາສາດ, ວາລະສານ ແລະປຶ້ມ ກ່ຽວກັບການບໍລິຫານລັດເອເລັກໂຕນິກ ໄດ້ຮັບການຈັດພິມຢ່າງຫລວງຫລາຍ ໃນຮູບແບບຂອງອອນລາຍ , ສື່ພິມພື້ນຖານຕ່າງໆ. ຄ່ຽງຄູ່ກັນນັ້ນ ບາງປະເທດມະຫາອຳນາດທາງດ້ານເສດຖະກິດ ແລະ ເຕັກໂນໂລຊີທີ່ທັນສະໄໝ ໄດ້ເລີ່ມມີໂຄງການທົດລອງ ຫັນການບໍລິຫານລັດໃນບາງຂະແໜງການ ແລະ ການບໍລິການພາກລັດເປັນລະບົບດິຈິຕອນ ໂດຍການໝຸນໃຊ້ຜົນສຳເລັດທາງດ້ານເຕັກໂນໂລຊີ, ວິທະຍາສາດເຂົ້າຊ່ວຍ ເປັນຕົ້ນແມ່ນ ສະຫລັດອາເມຣິກາ, ສະຫະ ພາບເອີຣົບ, ເກົາຫລີໃຕ້, ຍີ່ປຸ່ນ, ສະວິເດັນ, ເດັນມາກ, ແລະ ບັນດາປະເທດຕາເວັນຕົກ ອື່ນໆ (Grönlund & Horan, 2005, p. 713).

ໃນຂະບວນຄົ້ນຄວ້າວິທະຍາສາດ ກ່ຽວກັບການບໍລິຫານລັດເອເລັກໂຕນິກ ໄດ້ປາກົດມີນັກຄົ້ນຄວ້າວິທະຍາສາດ, ນັກບໍລິຫານ ແລະ ອົງການຈັດຕັ້ງສາກົນຈຳນວນໜຶ່ງ ໄດ້ມີຄວາມພະຍາຍາມໃຫ້ຄຳນິ ຍາມກ່ຽວກັບການບໍລິຫານລັດເອເລັກໂຕນິກ ໃນຫລາກຫລາຍແງ່ມຸມ ບົນພື້ນຖານຄວາມຮູ້ດ້ານວິຊາສະເພາະຂອງຕົນເອງ ເປັນຕົ້ນແມ່ນທ່ານ David Osborne ແລະ ທ່ານ Ted Gaebler ໄດ້ໃຫ້ນິຍາມກ່ຽວກັບການບໍລິຫານລັດເອເລັກໂຕນິກວ່າ “ການບໍລິຫານລັດເອເລັກໂຕນິກ ແມ່ນຂະບວນການນຳໃຊ້ເຕັກໂນໂລຊີ ໂດຍສະເພາະແມ່ນ ເວັບໄຊ ທີ່ຂັບເຄື່ອນໂດຍອິນເຕີເນັດ ເພື່ອຈັດຕັ້ງປະຕິບັດນະໂຍບາຍຂອງລັດ ແລະ ໃຫ້ບໍລິການແກ່ປະຊາຊົນພົນລະເມືອງ, ຫົວໜ່ວຍທຸລະກິດ, ພະນັກງານລັດ, ອົງການຈັດຕັ້ງລັດຖະບານ ຕ່າງໆ” (David, & Ted, 1992, p. 87). ທ່ານ Sharma ແລະ ທ່ານ Gupta ກໍ່ໄດ້ໃຫ້ຄຳນິຍາມ ການບໍລິຫານລັດເອເລັກໂຕນິກ ວ່າ “ການບໍລິຫານລັດເອເລັກໂຕນິກ ໝາຍເຖິງການໃຫ້ບໍລິການຜ່ານທາງເວັບໄຊ ຂອງບັນດາອົງການຈັດຕັ້ງລັດຖະບານທ້ອງຖິ່ນ ແລະ ສູນກາງ (Sharma & Gupta, 2003, p. 35). ນອກນັ້ນ Von Haldenwang (2004) ກໍໄດ້ໃຫ້ຄຳນິຍາມ ກ່ຽວກັບການ*ບໍລິຫານລັດເອ*ເລັກໂຕນິກນີ້ວ່າ “ການບໍລິຫານລັດເອເລັກໂຕນິກ ໝາຍເຖິງການທີ່ລັດຖະບານໄດ້ນຳໃຊ້ເຕັກໂນໂລຊີ, ຂໍ້ມູນຂ່າວສານທີ່ທັນສະໄໝ ໂດຍສະເພາະແມ່ນລະບົບອິນເຕີເນັດ ເພື່ອໃຫ້ໄດ້ຮັບຜົນທີ່ດີກວ່າເກົ່າ ໃນການບໍລິຫານຂອງກົງຈັກການຈັດຕັ້ງຂອງລັດຖະບານ”. ອົງການສະຫະປະຊາຊາດ (UN) ກໍ່ໄດ້ໃຫ້ຄຳນິຍາມ ກ່ຽວກັບການບໍລິຫານລັດເອເລັກໂຕນິກເຊັ່ນດຽວກັນ ເຊິ່ງໄດ້ລະບຸວ່າ “ການບໍລິຫານລັດເອເລັກໂຕນິກ ແມ່ນຂະບວນການໝຸນໃຊ້ຜົນປະໂຫຍດ ຈາກອິນເຕເນັດ, ເວັບໄຊ ເພື່ອສື່ສານ ແລະ ສະໜອງການບໍລິການຂອງລັດ ໃຫ້ກັບພົນລະເມືອງ” (United Nations, 2005, p. 14). ບົນພື້ນຖານບັນດາທັດສະນະ ແລະ ແນວຄິດທິດສະດີທີ່ກ່າວມາຂ້າງເທິງນັ້ນ ສາມາດສ່ອງແສງໃຫ້ເຫັນໄດ້ຈຸດທີ່ຄ້າຍຄືກັນ ແລະ ແຕກຕ່າງກັນຈຳນວນໜຶ່ງ ເຊິ່ງສາມາດສັງລວມໄດ້ວ່າ ການບໍລິຫານລັດດ້ວຍເອເລັກໂຕນິກ ແມ່ນການນຳໃຊ້ຂໍ້ມູນຂ່າວສານເຕັກໂນໂລຊີ, ນະວັດຕະກຳວິທະຍາສາດ ແລະ ລະບົບເຄືອຂ່າຍອິນເຕີເນັດ ເຂົ້າຊ່ວຍໃນການປັບປຸງການບໍລິການຂອງລັດ ໃຫ້ກັບພົນລະເມືອງ, ຫົວໜ່ວຍທຸລະກິດ ແລະ ອົງການຈັດຕັ້ງອື່ນໆ ຢ່າງມີປະສິດທິພາບ (Palvia & Sharma, 2007, p. 2]. ນອກນີ້ການບໍລິຫານລັດເອເລັກໂຕນິກ ຍັງໝາຍເຖິງການນຳໃຊ້ເຕັກໂນໂລຊີ ແລະ ຂໍ້ມູນຂ່າວ ສານ ເຂົ້າຊ່ວຍໃນການເຮັດວຽກ ແລະ ຂະບວນການເຮັດວຽກ ຂອງກົງຈັກລັດຖະບານ ໂດຍແນ່ໃສ່ເພີ່ມປະສິດທິພາບ, ຄວາມໂປ່ງໃສ ແລະ ການມີສ່ວນຮ່ວມ ຂອງພົນລະ ເມືອງ (Aleisa, 2024). ດັ່ງນັ້ນ, ໃນຂະບວນການບໍລິຫານລັດເອເລັກໂຕນິກ ທີ່ປະກອບມີ ຂະ ບວນການຕິດຕໍ່ພົວພັນທີ່ສຳຄັນ ລະຫວ່າງພາກສ່ວນຕ່າງໆ ຄື: ການພົວພັນລະຫວ່າງ ອົງການລັດຖະບານ ກັບພົນລະເມືອງ, ອົງການລັດຖະບານ ກັບຫົວໜ່ວຍທຸລະກິດ ເອກະຊົນ, ອົງການລັດຖະບານ ກັບອົງການລັດຖະບານດ້ວຍກັນ ເປັນຕົ້ນຕໍ ແລະ ອົງການລັດຖະບານ ກັບພະນັກງານ-ລັດຖະກອນ (United Nations, 2024). ສັງລວມແລ້ວ ການບໍລິຫານລັດດ້ວຍລະບົບ

ເອເລັກໂຕຼນິກ ແມ່ນການໝຸນໃຊ້ຜົນສຳເລັດ ຂອງເຕັກໂນໂລຊີ, ວິທະຍາສາດ ແລະ ນະວັດຕະກຳໃໝ່ ຂອງມວນມະນຸດ ເຂົ້າຊ່ວຍໃນປັບປຸງ, ເພີ່ມທະວີປະສິດທິພາບ ແລະ ປະສິດທິຜົນ ຂອງການບໍລິຫານລັດ ເປັນຕົ້ນແມ່ນແມ່ນກົນໄກການພົວພັນປະສານງານ, ການໝຸນໃຊ້ຊັບພະຍາກອນ, ຄວາມໂປ່ງໃສໃນການເຄື່ອນ ໄຫວ ຂອງກົງຈັກການຈັດຕັ້ງ, ການໃຫ້ບໍລິການພາກລັດໃຫ້ກັບ ປະຊາຊົນພົນລະເມືອງ ແລະ ຫົວໜ່ວຍທຸລະກິດ, ແລະ ການມີ ສ່ວນຮ່ວມ ຂອງພົນລະເມືອງ ໃນກົນໄກການບໍລິຫານລັດຕ່າງໆ.

2. ບົດບາດການບໍລິຫານລັດເອເລັກໂຕຼນິກ.

ການບໍລິຫານລັດເອເລັກໂຕຼນິກ ໄດ້ມີບົດບາດສຳຄັນ ຕໍ່ກັບການບໍລິຫານຂອງອົງການຈັດຕັ້ງລັດ ໃນຫລາຍດ້ານ ເປັນຕົ້ນແມ່ນ ການບໍລິຫານລັດເອເລັກໂຕຼນິກ ມີບົດບາດໃນ ການເພີ່ມປະສິດຕິພາບ, ປະສິດທິຜົນ; ເສີມສ້າງສະມັດຕະພາບ ໃນກົນໄກການປົກຄອງ ແລະ ການບໍລິຫານ ຂອງບັນດາກົງຈັກ ການຈັດຕັ້ງລັດໃນແຕ່ລະຂັ້ນ; ການບໍລິຫານລັດເອເລັກໂຕຼນິກ ຍັງມີບົດບາດສຳຄັນໃນການເພີ່ມປະສິດທິພາບ ແລະຂະຫຍາຍ ປະສິດທິຜົນ ຂອງການບໍລິການພາກລັດ ໃຫ້ກັບປະຊາຊົນ ພົນລະເມືອງ, ຫົວ ໜ່ວຍທຸລະກິດ ແລະ ພະນັກງານ - ລັດຖະກອນ. ການບໍລິຫານລັດເອເລັກໂຕຼນິກ ຍັງມີບົດບາດ ສຳຄັນ ຕໍ່ການລະບົບການພັດທະນາເສດຖະກິດ - ສັງຄົມ ໂດຍລວມ ຂອງປະເທດ ເປັນຕົ້ນແມ່ນໃນເວທີສາກົນ ເນື່ອງ ຈາກການບໍລິຫານລັດເອເລັກໂຕຼນິກ ແມ່ນໄດ້ຖືກນຳໃຊ້ເຂົ້າ ເປັນຕົວຊີ້ວັດໜຶ່ງ ໃນການປະເມີນລະດັບການພັດທະນາທາງ ດ້ານເຕັກໂນໂລຊີ, ເຕັກນິກວິທະຍາສາດ, ລະດັບຄວາມອາດ ສາມາດ ຂອງຊັບພະຍາ ກອນມະນຸດ, ລະດັບຄວາມໂປ່ງໃສ ຂອງກົງຈັກລັດຖະບານ, ການເສີມຂະຫຍາຍລະບອບ ປະຊາທິປະໄຕປະຊາຊົນ ແລະອື່ນໆ. ນອກຈາກນັ້ນ ການ ບໍລິຫານລັດເອເລັກໂຕຼນິກ ຍັງມີບົດບາດສຳຄັນ ໃນການຍົກ ລະດັບຂີດຄວາມສາມາດ ຂອງຊັບພະ ຍາກອນມະນຸດ ໃນ ຂະບວນການຫັນໄປສູ່ການບໍລິຫານລັດ ທັນສະໄໝແບບໃໝ່ນີ້ ເປັນຕົ້ນແມ່ນ ການບໍລິຫານລັດເອເລັກໂຕຼນິກ ໄດ້ມີບົດບາດ ສຳຄັນໃນການກະທົບໂດຍກົງ ຕໍ່ຂະບວນການບຳລຸງ - ກໍ່ສ້າງ ຊັບພະຍາກອນມະນຸດ ເພື່ອສະໜອງໃຫ້ກັບການບໍລິຫານລັດ ໃນແຕ່ລະຂົງເຂດກົງຈັກການຈັດຕັ້ງຂອງລັດ ຫລື ບຸກຄະລາ ກອນທີ່ຈຳເປັນ ໃນການຈັດຕັ້ງປະຕິບັດການໃຫ້ບໍລິການດີຈີ ຕອນ, ການກວດສອບ, ການຄວບຄຸມ - ຄຸ້ມຄອງລະບົບເຕັກ ໂນໂລຊີ, ອຸປະກອນເຄື່ອງມືດີຈີຕອນຕ່າງໆ ເຊິ່ງມັນໄດ້ ຮຽກຮ້ອງໃຫ້ຕ້ອງມີລະດັບຄວາມຮູ້, ຄວາມສາມາດ, ທັກສະ ຄວາມຊຳນານ ໃນລະດັບທີ່ແນ່ນອນໃດໜຶ່ງ ເພື່ອຮັບປະກັນ ປະສິດທິພາບ ແລະ ໝາກຜົນຂອງການ ບໍລິຫານລັດເອ ເລັກໂຕຼນິກນີ້; ໃນຄະນະດຽວກັນ ການບໍລິຫານລັດເອເລັກໂຕຼ ນິກ ຍັງມີບົດບາດໂດຍກົງ ໃນການສ້າງປະຊາກອນເອເລັກໂຕຼ ນິກ ເພື່ອຮັບປະກັນຄວາມອາດສາມາດ ຂອງປະຊາກອນ ໃນ ການເຂົ້າເຖິງການບໍລິການຂອງພາກລັດ ເຊິ່ງເປັນປັດໄຈທີ່ ສຳຄັນ ຕັດສິນການເຕີບໃຫຍ່ຂະຫຍາຍຕົວ ແລະ ການຄົງຕົວ ຂອງການບໍລິຫານລັດເອເລັກໂຕຼນິກສະໄໝໃໝ່ (Ntulo & Otike, 2013).

3. ຄວາມສຳຄັນ ຂອງການບໍລິຫານລັດເອເລັກໂຕຼນິ

ການບໍລິຫານລັດເອເລັກໂຕຼນິກ ມີຄວາມສຳຄັນຈຳເປັນ ຢ່າງຍິ່ງຕໍ່ການບໍລິຫານລັດ ແລະ ຄຸ້ມຄອງເສດຖະກິດ ໃນຍຸກ ແຫ່ງການປ່ຽນແປງໃໝ່ນີ້ ເນື່ອງຈາກການບໍລິຫານລັດເອ ເລັກໂຕຼນິກ ສາມາດສະໜອງໄດ້ຄວາມມຸ່ງມາດປາຖະໜາ ແລະ ຈຸດປະສົງຫລັກ ຂອງບັນດາອົງການລັດຖະບານ ເປັນຕົ້ນແມ່ນ:

ໜຶ່ງ, ການບໍລິຫານລັດເອເລັກໂຕຼນິກ ມີຄວາມສຳຄັນ ໃນການເພີ່ມປະສິດທິ ພາບ ແລະ ປະສິດທິຜົນໃນການບໍລິຫານ ຂອງບັນດາອົງການຈັດຕັ້ງລັດຖະບານ ເປັນຕົ້ນແມ່ນ ກົນໄກ ການປະສານງານ ລະຫວ່າງ ບັນດາອົງການຈັດຕັ້ງການບໍລິຫານ ລັດ, ລະຫວ່າງ ອົງການຈັດຕັ້ງລັດຖະບານ ກັບບັນດາຫົວໜ່ວຍ ທຸລະກິດ, ອົງການ ຈັດຕັ້ງລັດຖະບານ ກັບປະຊາຊົນ ພົນລະເມືອງ. ພ້ອມນັ້ນ ຍັງຈະເປັນການເພີ່ມປະສິດທິຜົນ ຂອງ ບັນດາໝາກຜົນວຽກງານການບໍລິຫານລັດ ເຊິ່ງຈະສາມາດປະ ເມີນໄດ້ຈາກຄຸນນະພາບ, ປະລິມານ, ຄວາມຖືກຕ້ອງ, ຄວາມ ປອດໄພຈາກການບໍລິຫານ ຂອງອົງ ການຈັດຕັ້ງລັດຖະບານ ແລະ ການບໍລິການຂອງລັດ ໃຫ້ກັບປະຊາຊົນ ແລະ ຫົວໜ່ວຍ ທຸລະກິດ.

ສອງ, ການບໍລິຫານລັດເອເລັກໂຕຼນິກ ເປັນກົນໄກແຫ່ງ ການບໍລິຫານໜຶ່ງ ທີ່ສຳຄັນໃນການເພີ່ມປະສິດທິພາບ ແລະ ປະ ສິດທິຜົນດ້ານຊັບພະຍາກອນ ທີ່ຈຳເປັນຕ້ອງໃຊ້ເຂົ້າໃນການ

ບໍລິຫານລັດ ເປັນຕົ້ນແມ່ນຊັບພະຍາກອນມະນຸດ, ວັດສະດຸ ອຸປະ ກອນພື້ນຖານສຳລັບວຽກງານບໍລິຫານລັດ, ເວລາລັດຖະ ການ, ລວມໄປເຖິງງົບປະ ມານ ເພື່ອໃຊ້ຈ່າຍເຂົ້າໃນກົນໄກການ ປະສານງານຕ່າງໆ ຂອງບັນດາກົງຈັກການຈັດ ຕັ້ງລັດຖະບານ;

ສາມ, ການບໍລິຫານລັດເອເລັກໂຕນິກ ແມ່ນມີສ່ວນ ສຳຄັນໃນການເພີ່ມທະວີຄວາມອາດສາມາດ ຂອງປະຊາຊົນ ແລະ ບັນດາຫົວໜ່ວຍທຸລະກິດ ໃຫ້ສາມາດເຂົ້າເຖິງການ ບໍລິການຂອງລັດ ໄດ້ຫລາຍຂຶ້ນ ເປັນຕົ້ນແມ່ນພາກສ່ວນທີ່ຢູ່ ຫ່າງໄກສອກຫລີກ, ທຸລະກັນດານ ຫລື ຫ່າງໄກຈາກສູນກາງ ຂອງການບໍລິຫານລັດ ເຊັ່ນ: ການເຂົ້າເຖິງແຫລ່ງຂໍ້ມູນຂ່າວສານ ຂອງລັດຖະບານ, ການເຂົ້າເຖິງ ແລະ ຮັບການ ບໍລິການ ສາທາລະນະຕ່າງໆ, ການມີສ່ວນຮ່ວມໃນບັນດາກິດຈະການ ບໍລິຫານລັດ, ແລະອື່ນໆ;

ສີ່, ການບໍລິຫານລັດເອເລັກໂຕນິກ ມີຄວາມສາຄັນອີກ ປະການໜຶ່ງ ກໍ່ຄືການຫລຸດຜ່ອນຄວາມສ່ຽງການສໍ້ລາດບັງ ຫລວງ, ເພີ່ມຄວາມໂປ່ງໃສໃນກົງຈັກການບໍລິ ຫານລັດ ແລະ ມີຄວາມສະດວກ ໃນການຕິດຕາມ, ກວດກາການເຄື່ອນໄຫວ ຂອງບັນດາອົງການຈັດຕັ້ງລັດຖະບານ ໄດ້ຕະຫລອດເວລາ ໂດຍ ຜ່ານລະບົບການຕິດຕາມ, ກວດກາເອເລັກໂຕນິກທີ່ທັນສະໄ ໝ.

II. ຜົນສຳເລັດການສ້າງ ແລະ ພັດທະນາການບໍລິຫານລັດເອ ເລັກໂຕນິກ ຢູ່ ສປປ ລາວ.

ອີງຕາມການສຳຫລວດ ຂອງສະຫະປະຊາຊາດ ກ່ຽວກັບ ການບໍລິຫານລັດເອເລັກໂຕນິກ ໃນປີ 2020 ໄດ້ສະແດງໃຫ້ ເຫັນວ່າ ມີຈຳນວນ 193 ປະເທດສະມາຊິກສະຫະປະຊາຊາດ ໄດ້ມີການພັດທະນາ ແລະ ນາໃຊ້ການບໍລິຫານລັດເອເລັກໂຕ ນິກ ໃນລະດັບທີ່ແຕກຕ່າງກັນ. ໃນນັ້ນມີຈຳນວນ 59 ປະເທດ, ກວມ 31 ທີ່ມີການພັດ ທະນາ ແລະ ນຳໃຊ້ລະບົບການ ບໍລິຫານລັດເອເລັກໂຕນິກ ໃນລະດັບກາງ; ຈຳນວນ 69 ປະເທດ, ກວມເອົາ 36 ທີ່ມີການພັດທະນາ ແລະ ນຳໃຊ້ການ ບໍລິຫານລັດເອເລັກໂຕນິກ ໃນລະດັບສູງ ແລະ ຈຳນວນ 57 ປະເທດ, ກວມເອົາ 29 ທີ່ມີການພັດ ທະນາ ແລະ ນຳໃຊ້ການ ບໍລິຫານລັດເອເລັກໂຕນິກ ໃນລະດັບສູງທີ່ ສຸດ (United Nations, 2020, p. 3); ບົນພື້ນຖານການນາໃຊ້ຕົວຊີ້ວັດ 3 ຢ່າງຕົ້ນຕໍ ໃນການປະເມີນລະດັບການພັດທະນາລັດ ຖະບານ ເອເລັກໂຕນິກ ຫລື ການບໍລິຫານລັດເອເລັກໂຕນິກ ຄື: ການ ໃຫ້ບໍລິການທາງອອນລາຍ (OSI), ໂຄງລ່າງພື້ນຖານທາງດ້ານ ໂທລະຄົມມະນາຄົມ (TII) ແລະ ຄວາມອາດສາມາດ ຂອງ ປະຊາກອນ (HCI) (United Nations, 2020, p. 1). ໃນ ປັດຈຸບັນ 5 ອັນດັບທີ່ຖືກຈັດເປັນປະເທດທີ່ມີການພັດທະນາ ແລະ ນາໃຊ້ການບໍລິຫານລັດເອເລັກໂຕນິກຫລາຍທີ່ສຸດໃນ ໂລກ ປະກອບມີ ເດັນມາກ, ສ. ເກົາຫລີ, ເອດສະໂຕເນຍ, ຟິນ ແລນ, ແລະ ອິດສະຕາລີ. ສ່ວນ ສປປ ລາວ ແມ່ນຖືກຈັດໃນ ອັນດັບ 175 ໃນຈຳນວນ 193 ປະເທດ (United Nations ,2020).

ໃນໄລຍະຜ່ານມາ, ພັກ - ລັດຖະບານລາວ ກໍ່ໄດ້ມີ ຄວາມເອົາໃຈໃສ່ສູງ ຕໍ່ການຫັນການບໍລິຫານລັດ ໄປສູ່ຄວາມ ທັນສະໄໝເທື່ອລະກ້າວ ເຊິ່ງໄດ້ສະແດງໃຫ້ເຫັນແຈ້ງໃນກອງ ປະຊຸມ ຂອງພັກປະຊາຊົນປະຕິວັດລາວ ສະໄໝທີ IX ໄດ້ ກຳນົດໃນແຜນ ການພັດທະນາເສດຖະກິດ - ສັງຄົມ ຄັ້ງທີ VII ວ່າ “ໃນການບຸກທະລຸກົນໄກ, ລະ ບອບ, ລະບຽບການ ບໍລິຫານລັດນັ້ນ ກ່ອນອື່ນໝົດ ຕ້ອງບູລະນະການບໍລິຫານ ແລະການບໍລິການໃຫ້ມີປະສິດທິຜົນ ແລະ ໂປ່ງໃສ; ຫັນເປັນ ທັນສະໄໝ ແລະ ເຂົ້າກັບລະ ບົບສາກົນ” (ວາລະສານອາລຸນ ໃໝ່, 2011, ໜ້າ 70). ຕໍ່ມາໃນມະຕິ X ຂອງພັກປະຊາຊົນ ປະຕິວັດລາວ ກໍ່ໄດ້ກາມົດເອົາການເພີ່ມທະວີປະສິດທິພາບການ ຄຸ້ມຄອງ ແລະ ການບໍລິຫານລັດ ເປັນຈຸດສຸມທີ່ສຳ ຄັນໃນແຜນ ພັດທະນາເສດຖະກິດ - ສັງຄົມ ຄັ້ງທີ VIII ໂດຍໄດ້ເນັ້ນ ໜັກວ່າ “ສືບຕໍ່ປັບປຸງການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານ ລັດ ໃຫ້ມີຄວາມກະທັດຮັດ, ມີປະສິດ ທິພາບສູງ ແລະ ທຸກ ຄົນສາມາດເຂົ້າເຖິງການບໍລິການ ຂອງລັດຢ່າງວ່ອງໄວ ແລະ ໂປ ງ ໃສ”[2,103]; ມາເຖິງກອງປະຊຸມໃຫຍ່ ຂອງພັກ ປະຊາຊົນປະຕິວັດລາວ ສະໄໝທີ XI ກໍຍັງໄດ້ສືບຕໍ່ກາແໜ້ນ ແລະ ຢືດໝັ້ນເນື້ອໃນການປັບປຸງກົນໄກການບໍລິຫານລັດ ທີ່ ກຽມພ້ອມຫັນໄປສູ່ການບໍລິຫານລັດ ແບບໃໝ່ທັນສະໄໝ ເພື່ອຍົກສູງປະສິດຕິພາບ ແລະ ຄວາມໂປ່ງໃສໃນການບໍລິຫານ ລັດ ໂດຍໄດ້ກຳນົດຢ່າງຊັດເຈນ ທິດທາງລວມ ໃນແຜນການ

ພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ຄັ້ງທີ IX ໂດຍໄດ້ ລະບຸວ່າ "ຫັນການຄຸ້ມຄອງ ແລະ ການບໍລິຫານລັດ ໄປສູ່ ຄວາມທັນສະໄໝ, ມີຄວາມກະທັດຮັດ, ໂປ່ງໃສ, ວ່ອງໄວ ແລະ ມີປະສິດທິພາບ ຮັບໃຊ້ປະຊາຊົນທີ່ແທ້ຈິງ"(ວາລະສານ ອາລຸນໃໝ່, 2021, ໜ້າ 54]. ການປັບປຸງ ແລະ ພັດທະນາ ລັດຖະບານເອເລັກໂຕຼນິກ ຢູ່ ສປປ ລາວ ແມ່ນສາມາດສັງລວມ ໄດ້ຜົນສຳເລັດສຳຄັນ ໃນແຕ່ລະດ້ານລະອຽດດັ່ງນີ້:

1). ລັດຖະບານ ໄດ້ສ້າງພື້ນຖານທາງດ້ານນິຕິກຳການ ບໍລິຫານລັດດ້ວຍເອເລັກໂຕຼນິກ.

ບົນພື້ນຖານທິດຊີ້ນຳ ແລະແນວທາງໃນການພັດທະນາ ປັບປຸງການບໍລິຫານລັດ ດ້ວຍເອເລັກໂຕຼນິກ ທີ່ທັນສະໄໝ ຈຶ່ງ ໄດ້ເກີດມີນິຕິກຳຕ່າງໆ ເພື່ອເປັນການປູທາງ ແລະ ສ້າງພື້ນຖານ ໂຄງລ່າງໃຫ້ແກ່ການບໍລິຫານລັດເອເລັກໂຕຼນິກ ທີ່ມີ ປະສິດທິພາບສູງຂຶ້ນ ເປັນຕົ້ນແມ່ນ ສະພາແຫ່ງຊາດລາວໄດ້ ຮັບຮອງ ແລະ ປະກາດໃຊ້ກົດໝາຍຈຳ ນວນ 9 ສະບັບ ເພື່ອ ເປັນການເພີ່ມທະວີການພັດທະນາ ແລະ ຄຸ້ມຄອງການບໍລິຫານ ລັດເອເລັກໂຕຼນິກ ເປັນຕົ້ນແມ່ນກົດໝາຍວ່າດ້ວຍ ໂທລະ ຄົມມະນາຄົມ ໃນປີ 2012, ກົດໝາຍວ່າດ້ວຍ ທຸລະກຳທາງເອ ເລັກໂຕຼນິກ ໃນປີ 2012, ກົດໝາຍວ່າດ້ວຍ ວິທະ ຍາສາດ ແລະ ເຕັກໂນໂລຊີ ໃນປີ 2013, ກົດໝາຍວ່າດ້ວຍ ຄວາມ ປອດໄພທາງດ້ານເຕັກໂນໂລຊີຊີວະພາບ ໃນປີ 2013, ກົດໝ າຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນອາຊະຍາກາທາງລະບົບ ຄອມພິວເຕີ ໃນປີ 2015, ກົດໝາຍວ່າດ້ວຍ ເຕັກໂນໂລຊີ ແລະ ການສື່ສານ ໃນປີ 2016, ກົດໝາຍວ່າດ້ວຍ ການປົກ ປ້ອງຂໍ້ມູນເອເລັກໂຕຼນິກ ໃນປີ 2017, ກົດໝາຍວ່າດ້ວຍ ການ ຖ່າຍທອດເຕັກໂນໂລຊີ ໃນປີ 2017 ແລະ ກົດໝາຍວ່າດ້ວຍ ລາຍເຊັນເອເລັກໂຕຼນິກ ໃນປີ 2018 (ສະພາແຫ່ງຊາດ, 2021). ພ້ອມນີ້ ຍັງປະກອບມີດາລັດໃນການແນະນາການ ພັດທະນາ ແລະ ຮັບປະກັນຄວາມປອດໄພ ໃນການບໍລິຫານ ລັດດ້ວຍລະບົບເອເລັກໂຕຼນິກ ອີກຈຳນວນໜຶ່ງ ທີ່ເປັນພື້ນຖານ ທາງດ້ານນິຕິກຳ ໃນການຈັດຕັ້ງປະຕິບັດ ເປັນຕົ້ນແມ່ນ ດາລັດ ຂອງລັດຖະບານ ສະບັບເລກທີ 164/ລບ, ລົງວັນທີ 21 ມີນາ 2012 ວ່າດ້ວຍການຄຸ້ມຄອງ ແລະ ນາໃຊ້ອິນເຕີເນັດ ແລະ ລະຫັດຊື່ ອິນເຕີເນັດ ຂອງ ສປປ ລາວ; ດຳລັດຂອງລັດຖະບານ ສະບັບເລກທີ 327/ລບ, ລົງວັນທີ 16 ກັນຍາ 2014 ວ່າດ້ວຍ ການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ; ດຳລັດຂອງລັດ ຖະບານ ສະບັບເລກທີ 412/ລບ, ລົງວັນທີ 10 ພະຈິກ 2016 ວ່າດ້ວຍ ຂໍ້ມູນຂ່າວສານຜ່ານອິນເຕີເນັດ (ກະຊວງເຕັກໂນໂລຊີ ແລະການສື່ສານ, 2021).

ນອກຈາກບັນດາກົດໝາຍ ແລະນິຕິກຳຕ່າງໆ ທີ່ເປັນ ພື້ນຖານເຫລົ່ານີ້ແລ້ວ ສປປ ລາວ ຍັງໄດ້ອອກແຜນຍຸດທະສາດ ສະເພາະສຳລັບການປັບປຸງພັດທະນາການບໍລິຫານລັດເອ ເລັກໂຕຼນິກ ເປັນຕົ້ນແມ່ນ ແຜນຍຸດທະສາດການພັດທະນາ ສາຍໃຍອິນເຕີເນັດແຫ່ງຊາດ ແຕ່ 2012-2020, ແຜນແມ່ບົດ ການພັດທະນາລະບົບການບໍລິຫານລັດ ແຕ່ 2013-2020. ບົນພື້ນຖານທິດຊີ້ນຳຂອງພັກ ແລະ ແຜນຍຸທະສາດການປັບ ປຸງ ແລະ ແຜນການພັດທະນາການບໍລິຫານລັດ ດ້ວຍເອ ເລັກໂຕຼນິກ ຂອງ ສປປ ລາວ ເຊິ່ງໄດ້ກຳນົດຢ່າງລະອຽດ ແລະ ແບ່ງອອກເປັນ 3 ໄລຍະຕົ້ນຕໍຄື: ໄລຍະທີ I (2013-2015) ເປັນໄລຍະການສ້າງພື້ນຖານໂຄງລ່າງໃນການບໍລິຫານລັດ ໃຫ້ ກັບບັນດາອົງການຈັດຕັ້ງລັດຖະບານຂັ້ນສູນກາງ ແລະ ທ້ອງ ຖິ່ນ; ເປີດໃຫ້ມີການນຳໃຊ້ການສື່ສານພົວພັນ ລະຫວ່າງ ອົງ ການຈັດຕັ້ງລັດຖະບານ ແລະ ລັດຖະກອນ; ໄລຍະ II (2016-2018) ເຊິ່ງໄດ້ສຸມໃສ່ການຂະຫຍາຍພື້ນຖານໂຄງລ່າງ ເຊື່ອມ ໂຍງເຂົ້າກັບບັນດາຫົວໜ່ວຍທຸລະກິດ ແລະ ເປີດໃຫ້ມີການຄຸ້ມ ຄອງ, ຕິດຕໍ່ພົວພັນກັບບັນດາຫົວໜ່ວຍທຸລະ ກິດ ຜ່ານລະບົບ ການບໍລິຫານລັດດ້ວຍເອເລັກໂຕຼນິກ; ພິເສດໃນໄລຍະນີ້ ເພື່ອ ເປັນການພັດທະນາການບໍລິຫານ ລັດດ້ວຍລະບົບເອ ເລັກໂຕຼນິກຢ່າງເຕັມຮູບແບບນີ້ ກະຊວງໄປຊະນີ, ໂທລະ ຄົມມະນາຄົມ ແລະການສື່ສານ ໄດ້ປະກາດສ້າງຕັ້ງສູນການບໍລິ ຫານລັດດ້ວຍເອເລັກໂຕຼນິກ ຫລື ສູນລັດຖະບານເອເລັກໂຕຼ ນິກ ຂຶ້ນໃນທ້າຍປີ 2018 (ກະຊວງໄປຊະນີ, ໂທລະ ຄົມມະນາຄົມ ແລະການສື່ສານ, 2018). ໄລຍະ III (2019-2020) ແມ່ນໄດ້ມີການນຳໃຊ້ລະບົບການບໍລິຫານລັດ ດ້ວຍເອ ເລັກໂຕຼນິກເຕັມຮູບແບບ ໂດຍເລີ່ມໃຫ້ມີການບໍລິການອອນ ລາຍ ຂອງພາກລັດໃຫ້ກັບພົນລະເມືອງ (ກະຊວງໄປຊະນີ ແລະ ໂທລະຄົມມະນາຄົມ ແລະ ການສື່ສານ, 2016, ໜ້າ 11).

2). ລັດຖະບານໄດ້ພັດທະນາ ແລະປັບປຸງພື້ນຖານໂຄງລ່າງການບໍລິຫານລັດເອເລັກໂຕນິກ.

ໃນໄລຍະເກືອບສອງທົດສະວັດທີ່ພັກ - ລັດຖະບານ ລາວ ໄດ້ໃຫ້ຄວາມເອົາໃຈ ໃສ່ໃນການຫັນການບໍລິຫານລັດ ເປັນທັນສະໄໝເທື່ອລະກ້າວນັ້ນ ພື້ນຖານໂຄງລ່າງສຳຄັນ ທີ່ຮັບ ໃຊ້ສຳລັບການບໍລິຫານລັດດ້ວຍເອເລັກໂຕນິກ ຈຳນວນໜຶ່ງໄດ້ ມີການເຕີບໃຫຍ່ຂະຫຍາຍຕົວ ແລະ ພັດທະນາຫລາຍຂຶ້ນ ເຊິ່ງ ສະແດງອອກຄື: ໃນປັດຈຸບັນ ສປປ ລາວ ໄດ້ມີ 5 ບໍລິສັດທີ່ ໃຫ້ການບໍລິການດ້ານເຄືອຂ່າຍອິນເຕີເນັດ ຄື: ບໍລິສັດ ETL, ບໍລິສັດ ໂທລະຄົມລາວ, ບໍລິສັດ UNITEL, T-plus ແລະ ບໍລິສັດ Sky ໂທລະຄົມ ເມື່ອທຽບກັບປີ 2014 ມີພຽງ 4 ບໍລິສັດ. ພ້ອມກັນນັ້ນ ກໍ່ປະກອບມີສະຖານນີສົ່ງສັນຍານອິນ ເຕີເນັດ ຜ່ານມືຖືລະບົບ 3G ແລະ 4 G ຈຳນວນ 9,7 ພັນ ສະຖານນີ ກວມເອົາ 55 ຂອງບ້ານ ໃນຂອບເຂດທົ່ວປະເທດ; ພ້ອມນີ້ນສາມາດຂະຫຍາຍສາຍສົ່ງໃຍແກ້ວ 90,258 ກິໂລແມັດໃນປັດຈຸບັນ (ກະຊວງໄປຊະນີ, ໂທລະ ຄົມມະນາຄົມ ແລະ ການສື່ສານ, 2019, ໜ້າ 11] ເມື່ອທຽບ ກັບປີ 2014 ມີສາຍໃຍແກ້ວ ພຽງແຕ່ 60,813 ກິໂລແມັດ ແລະ ມີພຽງ ແຕ່ລະບົບ 2G ແລະ 3G ເທົ່ານັ້ນ (ກະຊວງໄປ ຊະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, 2014. ໜ້າ 8-10). ມາເຖິງປັດຈຸບັນ ລະບົບເຄືອຂ່າຍໂທລະຄົມມະນາຄົມ ໄດ້ຂະຫຍາຍລົງຮອດເຂດຫ່າງໄກສອກຫລີກ ເຊິ່ງໄດ້ມີເຄືອ ຂ່າຍໂທລະສັບມືຖືກວມເອົາເຖິງ 95 ແລະ ເຄືອຂ່າຍອິນເຕີ ເນັດກວມເອົາເຖິງ 82 ຂອງບັນດາບ້ານທົ່ວປະເທດ (ກະຊວງ ໄປຊະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, 2019, ໜ້າ 11) ໃນປັດຈຸບັນ ໄດ້ສຳເລັດການຕິດຕັ້ງລະບົບເຊີເວີ ແລະ ອຸປະກອນໄອຊີທີ ໃຫ້ກັບບັນ ດາອົງການຈັດຕັ້ງລັດ ຂັ້ນສູນ ກາງ ແລະ ທ້ອງຖິ່ນ ສຳເລັດໂດຍພື້ນຖານ ເປັນຕົ້ນແມ່ນ ບັນດາ ກະຊວງຂັ້ນສູນກາງ ແລະ ອົງການທຽບເທົ່າ, ທ້ອງວ່າການ ແຂວງ ແລະ ທ້ອງວ່າການເມືອງຈຳນວນໜຶ່ງ; ໃນນີ້ ຈຳນວນ 44 ພາກສ່ວນຂອງລັດ ແມ່ນມີລະບົບສາຍໃຍແກ້ວ ເຊື່ອມຕໍ່ ອິນເຕີເນັດ ກັບສູນຖານຂໍ້ມູນແຫ່ງຊາດ, 96 ພາກສ່ວນ ແມ່ນ ມີລະ ບົບອິນເຕີເນັດໃຊ້ພາຍໃນ ແລະ ບັນດາກະຊວງອົງການຢູ່ ສູນກາງ ແມ່ນສາມາດເຊື່ອມຕໍ່ລະບົບອິນເຕີເນັດ ໄດ້ (ກອງ ປະຊຸມສຳມະນາວິທະຍາສາດ ກ່ຽວກັບນະໂຍບາຍແຫ່ງຊາດ ແລະ ໂຄງການເພື່ອສັງຄົມດີຈີຕອນ ຢູ່ອາຊີ, 2018, ໜ້າ 14).

ອີກພື້ນຖານໜຶ່ງທີ່ສຳຄັນ ສາລັບການບໍລິຫານລັດເອ ເລັກໂຕນິກ ກໍ່ຄືໃນປັດຈຸບັນ ສປປ ລາວ ໄດ້ມີເວັບໄຊ ຈານວນ ທັງໝົດ 112 ເວັບໄຊ ໃນນັ້ນເປັນເວັບໄຊປະຕູຂໍ້ມູນແຫ່ງຊາດ ຈຳນວນ 2 ເວັບໄຊ, ເວັບໄຊບັນດາອົງການຈັດຕັ້ງຂັ້ນສູນກາງ 57 ເວັບໄຊ, ຂັ້ນແຂວງ 6 ເວັບໄຊ ແລະ ບັນດາພາກສ່ວນອົງ ການຈັດຕັ້ງຂັ້ນທ້ອງຖິ່ນ ຈຳນວນ 29 ເວັບໄຊ ແລະ ເວັບໄຊ ສຳລັບສາທາລະນະທົ່ວໄປ ຈຳນວນ 28 ເວັບໄຊ (ສູນ ລັດຖະບານເອເລັກໂຕນິກ, 2016, ໜ້າ 5). ນອກນີ້ ຍັງມີສູນ ອິນເຕີເນັດແຫ່ງຊາດ ແລະ ສູນຖານຂໍ້ມູນການບໍລິຫານລັດເອ ເລັກໂຕນິກ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງກະຊວງໄປຊະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ທີ່ເປັນໂຄງລ່າງພື້ນຖານ ທີ່ສຳຄັນ ໃຫ້ແກ່ການບໍລິຫານລັດເອເລັກໂຕນິກ.

3) ການໃຫ້ບໍລິການອອນລາຍ ໃນລະບົບການບໍລິຫານ ລັດເອເລັກໂຕນິກ

ໃນດ້ານການບໍລິການອອນລາຍ ເປັນປັດໄຈໜຶ່ງທີ່ສຳຄັນ ຂອງການບໍລິຫານລັດ ເອເລັກໂຕນິກ; ໃນໄລຍະຜ່ານມາເຫັນ ໄດ້ວ່າ ການໃຫ້ບໍລິການຜ່ານລະບົບອອນລາຍຂອງພາກລັດ ໃຫ້ ກັບພາກສ່ວນຫົວໜ່ວຍທຸລະກິດ, ບຸກຄະລະກອນ, ແລະ ສາ ທາລະ ນະຊົນທົ່ວໄປ ມີຫລາຍຢ່າງພົ້ນເດັ່ນຂຶ້ນ ເປັນຕົ້ນແມ່ນ ການອະນຸຍາດໃຫ້ດາວໂຫຼດ ຟອນເພັດຊະຣາດ ສາລັບ ໂທລະສັບ, ຄອມພິວເຕີ, ແປ້ນພິມພາສາລາວ ທີ່ສາມາດໃຊ້ກັບ ສື່ອອນລາຍ ແລະ ສິ່ງພິມ ໃນໜ້າຈໍອິນເຕີເນັດລະບົບຕ່າງໆໄດ້ ເຊິ່ງຟອນເພັດຊະ ຣາດ ແມ່ນໄດ້ຮັບການດາວໂຫຼດ ແລະ ນາໃຊ້ ຢ່າງກວ້າງຂວາງ ໃນບັນດາເຄື່ອງເອເລັກ ໂຕນິກຊະນິດຕ່າງໆ ເຊິ່ງຊ່ວຍໃຫ້ການນຳໃຊ້ພາສາລາວ ໃນສິ່ງພິມອອນລາຍຫລາຍ ຂຶ້ນ. ນອກຈາກນີ້ ພາຍໃຕ້ແຜນຍຸທະສາດ ຂອງລັດຖະບານ ໃນ ການພັດທະນາການບໍລິຫານລັດເອເລັກໂຕນິກ; ສູນລັດຖະບານ ເອເລັກໂຕນິກ ໄດ້ມີການໃຫ້ບໍລິການລະ ບົບຫ້ອງການທັນສະໄ ໝ (e-Office), ລະບົບຈົດໝາຍເອເລັກໂຕຣນິກ ຂອງລັດຖະ ບານ (e-Mail), ລະບົບກອງປະຊຸມທາງໄກ (Video Conferencing), ລະບົບປະຕູຖານຂໍ້ ມູນແຫ່ງຊາດ (e-Portal), ສູນຂໍ້ມູນຂ່າວສານ (Data Center, G-Could),

ລະບົບການສົນທະນາພາກລັດ (G-Chat). ນອກນີ້ ໄດ້ມີໜ້າວຽກທີ່ສຳຄັນ ຂອງລັດ ຖະບານຈຳນວນໜຶ່ງ ກໍ່ໄດ້ຮັບການພັດທະນາ ແລະ ຫັນໄປສູ່ການບໍລິຫານແບບເອເລັກໂຕຼນິກ ສຳເລັດ ເຊິ່ງແຕ່ລະພາກສ່ວນສາມາດພັດທະນາ ແລະ ປັບປຸງ ບັນລຸໄດ້ ໃນລະຫວ່າງ 5-50 ເປັນຕົ້ນແມ່ນລະບົບ E-ສະຖິຕິ, E-ບຸກຄະລະກອນ, E-ງົບປະມານ, E-ພາຫະນະ, E-ທີ່ດິນ, E-ໄພພິບັດ, E-ການຂຶ້ນທະບຽນ, E-ການລົງທຶນ, E-ພາສີ, E-ການຄ້າ, E-ການທ່ອງທ່ຽວ, E-ໂລຈິສ໌ຕິກ, E-ໜັງສືຜ່ານແດນ, E-ສາທາລະນາສຸກ, E-ອາຊີບ, E-ການສຶກສາ, E-ພົນລະເມືອງ, ແລະ E-ການຊຳລະເງິນ (ກອງປະຊຸມສຳມະນາວິທະຍາສາດ ກ່ຽວກັບນະໂຍບາຍແຫ່ງຊາດ ແລະໂຄງການເພື່ອສັງຄົມດີຈິຕອນ ຢູ່ອາຊີ, 2018, ໜ້າ 14).

ອີກດ້ານໜຶ່ງ ກໍ່ສາມາດສັງເກດເຫັນໄດ້ວ່າ ການນຳໃຊ້ບັນດາການບໍລິການອອນລາຍ ກໍ່ມີທ່າອ່ຽງເພີ່ມຂຶ້ນ ເປັນຕົ້ນ ແມ່ນຂະແໜງການໃຫ້ບໍລິການດາວໂຫຼດຟອມເພັດຊະຣາດ ທີ່ຮັບໃຊ້ເຂົ້າໃນສື່ອອນລາຍ ແລະ ຕິດຕັ້ງໃນເຄື່ອງເອເລັກໂຕຼນິກ ເພື່ອນຳໃຊ້ເປັນພາສາລາວ ຈຳນວນທັງໝົດ 278.770 ຄັ້ງ, ຜູ້ເຂົ້າຮ່ວມນຳ ໃຊ້ລະບົບກອງປະຊຸມທາງໄກ ຈຳນວນ 469 ຄົນ, ຜູ້ທີ່ໄດ້ຮັບສິດນຳໃຊ້ອີເມວ ຂອງລະບົບການບໍລິຫານລັດດ້ວຍເອເລັກໂຕຼນິກ ຈຳນວນ 1.750 ບັນຊີ, ຜູ້ທີ່ນຳໃຊ້ລະບົບ E-office ຈຳນວນ 590 ຄົນ (ກະຊວງໄປຊະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, 2019, ໜ້າ 48). ນອກຈາກນີ້ຍັງ ມີລະບົບ E-ໜັງສືຜ່ານແດນ ທີ່ສາມາດນຳໃຊ້ໃນບັນດາດ່ານສາກົນໄດ້ ເພື່ອອຳນວຍຄວາມສະດວກໃຫ້ແກ່ບັນດານັກທ່ອງທ່ຽວຕ່າງປະເທດໃນການເຂົ້າອອກ ສປປ ລາວ ແລະ ກໍ່ຍັງມີຫລາຍພາກສ່ວນຂອງລັດຖະບານ ທີ່ໄດ້ລິເລີ່ມຫັນເຂົ້າສູ່ການບໍລິການໃນລະບົບອອນລາຍ ເປັນຕົ້ນແມ່ນ ລະບົບການໃຫ້ບໍລິການດ້ານຂໍ້ມູນຂ່າວສານ, ການຂຶ້ນທະບຽນວິສາຫະກິດ ຂອງກະຊວງແຜນການ ແລະ ການລົງທຶນ, ລະບົບການເຜີຍແຜ່ກົດໝາຍຂອງສະພາແຫ່ງຊາດ, ລະບົບຖານຂໍ້ມູນດ້ານສະຖິຕິດ້ານພູມສາດ, ປະຊາກອນ, ແລະ ເສດຖະກິດ -ສັງຄົມ ຂອງສູນສະຖິຕິແຫ່ງຊາດ.

4). ຄວາມອາດສາມາດ ຂອງປະຊາກອນ ໃນການຫັນເຂົ້າສູ່ການບໍລິຫານລັດດ້ວຍເອເລັກໂຕຼນິກ.

ເມື່ອພວກເຮົາເບິ່ງໃນດ້ານຄວາມອາດສາມາດ ດ້ານຊັບພະຍາກອນມະນຸດ ໃນການເຂົ້າເຖິງພື້ນຖານ ໂຄງລ່າງ ທີ່ສຳຄັນເປັນຕົ້ນແມ່ນ ລະບົບເຄືອຂ່າຍສັນຍານອິນເຕີເນັດ; ອີງຕາມການສຳຫລວດ ຂອງກະຊວງໂທລະຄົມມະນາຄົມ, ໄປຊະນີ ແລະ ການສື່ ສານ; ໃນປີ 2019 ໃຫ້ຮູ້ວ່າ 71 ຂອງຄົວເຮືອນ ໃນຂອບເຂດທົ່ວປະເທດ ຂອງ ສປປ ລາວ ແມ່ນໄດ້ເຊື່ອມຕໍ່ລະບົບອິນເຕີເນັດ, 30 ແມ່ນໄດ້ມີລະບົບຄອມພິວເຕີທີ່ເຊື່ອມອິນເຕີເນັດພາຍໃນບ້ານ, ປະຊາກອນຫລາຍກວ່າ 50 ຂອງປະຊາກອນທັງໝົດ ແມ່ນໄດ້ນຳໃຊ້ອິນເຕີເນັດ ເຊິ່ງໄດ້ມີຫລາຍກວ່າ 3,5 ລ້ານ ບັນຊີທີ່ໄດ້ລົງທະ ບຽນນຳໃຊ້ອິນເຕີເນັດ (ກະຊວງໄປຊະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, 2019, ໜ້າ 15; 39).

III. ບັນຫາໃນການພັດທະນາ ແລະ ປັບປຸງການບໍລິຫານລັດດ້ວຍເອເລັກໂຕຼນິກ ຢູ່ ສປປ ລາວ.

ເຖິງແມ່ນວ່າໃນພາບລວມນັ້ນ ຈະມີການເຕີບໃຫຍ່ຂະຫຍາຍຕົວ ແລະ ມີການພັດທະນາຫລາຍ ໃນວຽກງານການຫັນໄປສູ່ການບໍລິຫານລັດ ດ້ວຍເອເລັກໂຕຼນິກທີ່ທັນສະໄໝ ໃນສອງທົດສະວັດຜ່ານມາ; ແຕ່ເມື່ອທຽບກັບລະດັບການພັດທະນາການບໍລິຫານລັດເອເລັກໂຕຼນິກ ຂອງບັນດາປະເທດອາຊຽນ ແລະ ສາກົນ ກໍ່ເຫັນໄດ້ຢ່າງຈະແຈ້ງວ່າ ປະເທດເຮົາຍັງມີການຂະຫຍາຍຕົວ ແລະ ການພັດທະນາທີ່ຊັກຊ້າ, ຂາດຄຸນນະພາບ ແລະ ມີປະສິດທິຜົນຕ່ຳ ເຊິ່ງສະແດງອອກໃນການສາຫລວດລະດັບການພັດທະນາການບໍລິຫານລັດເອເລັກໂຕຼນິກ ໃນບັນດາປະເທດສະມາຊິກສະຫະປະຊາຊາດ ປະຈຳປີ 2020 ແລະ ການປຽບທຽບລະດັບການພັດທະນາລັດຖະບານເອເລັກໂຕຼນິກ ໃນບັນດາປະເທດສະມາຊິກອາຊຽນ, ສປປ ລາວ ຖືກຈັດຢູ່ອັນດັບທີ 175 ໃນຈຳນວນປະເທດສະມາຊິກສະຫະປະຊາຊາດ ຈຳນວນທັງໝົດ 193 ປະເທດ ແລະ ຖືກຈັດເປັນອັນດັບສຸດທ້າຍ ໃນຈຳນວນ 10 ປະເທດສະມາຊິກອາຊຽນ (ອີງການພັດທະນາສະຫະປະຊາຊາດ ປະຈຳລາວ, 2021, ໜ້າ 13). ເມື່ອຄົ້ນຄວ້າພິຈາລະນາບົນພື້ນຖານດັ່ງກ່າວ ສົມທົບກັບການຄົ້ນຄວ້າພິຈາລະນາ, ວິເຄາະວິ ໄຈໃນບັນດາປັດໄຈຕົວຊີ້ວັດ ຂອງການບໍລິຫານລັດເອເລັກໂຕຼນິກ ຢ່າງລະອຽດຖີ່ຖ້ວນແລ້ວ ສາມາດເຫັນໄດ້ວ່າ ການພັດທະນາການບໍລິຫານລັດທີ່

ທັນສະໄໝ ຫລື ການຫັນໄປສູ່ການບໍລິຫານລັດ ເອເລັກໂຕຼນິກ ຂອງລັດຖະບານ ຍັງຕ້ອງພົບກັບສິ່ງທີ່ທ້າທາຍ ແລະ ບັນຫາ ຕົ້ນຕໍຈຳນວນໜຶ່ງ ທີ່ເປັນຕົວຖ່ວງດຶງທີ່ສຳຄັນ ໃນການຫັນເປັນທັນສະໄໝ ແລະ ການບໍລິຫານລັດເອເລັກໂຕຼນິກ ທີ່ສົມບູນ ຄື

1. ໂຄງລ່າງພື້ນຖານການບໍລິຫານລັດເອເລັກໂຕຼນິກ ຍັງ ບໍ່ທັນໄດ້ຮັບການພັດທະນາເທົ່າທີ່ຄວນ.

ໂຄງລ່າງພື້ນຖານທີ່ເປັນກຳລັງຂັບເຄື່ອນທີ່ສຳຄັນ ຂອງ ການຫັນໄປສູ່ການບໍລິ ຫານລັດເອເລັກໂຕຼນິກ ເຖິງແມ່ນວ່າໄດ້ ຮັບການພັດທະນາ ແລະ ປັບປຸງຢ່າງຕໍ່ເນື່ອງ ແຕ່ກໍ່ຍັງບໍ່ທັນ ສົມບູນ ແລະ ເປັນບັນຫາທີ່ທ້າທາຍຕົ້ນຕໍ ຕໍ່ຄວາມຮັບຜິດຊອບ ຂອງລັດ ຖະບານ ແລະ ຍຸທະສາດການເຊື່ອມໂຍງກັບບັນດາ ປະເທດພາກພື້ນ ແລະ ສາກົນ ໃນໄລຍະຍາວ ເປັນຕົ້ນແມ່ນ ລະບົບເຄືອຂ່າຍ ແລະ ຄຸນນະພາບ ຂອງອິນເຕີເນັດ. ສຳລັບ ສປປ ລາວ ເຖິງແມ່ນວ່າ ປະຊາກອນສ່ວນໃຫຍ່ໃນເຂດຕົວ ເມືອງໃຫຍ່ ແມ່ນສາມາດ ເຂົ້າເຖິງລະບົບອິນເຕີເນັດ ແຕ່ຍັງມີ ຫລາຍຂົງເຂດ, ຫຼາຍພື້ນທີ່ຂອງປະເທດ ຍັງບໍ່ທັນສາມາດເຂົ້າ ເຖິງລະບົບອິນເຕີເນັດໄດ້ ເປັນຕົ້ນແມ່ນເຂດຕົວເມືອງນ້ອຍ, ຄວາມໜາ ແໜ້ນຂອງປະຊາກອນຕ່ຳ, ພື້ນທີ່ສ່ວນໃຫຍ່ເປັນ ເຂດພູສູງ, ມີຄວາມຫຍຸ້ງຍາກໃນການຂະຫຍາຍພື້ນຖານໂຄງ ລ່າງເຫລົ່ານີ້, ຍິ່ງໄປກວ່ານັ້ນ ບັນດາເຄືອຂ່າຍທີ່ໃຫ້ບໍລິ ການອິນ ເຕີເນັດ ເຫັນໄດ້ວ່າ ຄຸນນະພາບໃນການໃຊ້ງານຕົວຈິງຍັງຢູ່ໃນ ລະດັບຕ່ຳ ເມື່ອທຽບກັບບັນດາປະເທດ ທີ່ປະສົບຜົນສຳເລັດໃນ ການປະຕິຮູບ ການບໍລິຫານລັດເອເລັກ ໂຕຼນິກ ໃນພາກພື້ນ ອາຊີ ເປັນຕົ້ນແມ່ນປະເທດ ສ. ເກົາຫລີ, ຍີ່ປຸ່ນ, ອົດສະຕຣາລີ ແລະ ສິງກະໂປ. ເມື່ອປຽບທຽບດ້ານຄຸນນະພາບຄວາມໄວ ຂອງອິນເຕີເນັດ ໃນບັນດາປະເທດພາກພື້ນອາຊຽນ ແລະ ສາກົນ ໂດຍອີງຕາມສູນຂໍ້ ມູນຈາກສູນຂ່າວສານອາຊຽນ ໃນການ ປຽບທຽບຄວາມໄວດ້ານອິນເຕີເນັດ ໃນບັນດາປະເທດ ສະມາຊິກອາຊຽນ ປະຈຳປີ 2020, ສະແດງໃຫ້ເຫັນວ່າ ສປປ ລາວ ໄດ້ຖືກຈັດໃນອັນດັບທີ 6 ຂອງອາຊຽນ ແລະ ເປັນອັນ ດັບທີ 84 ຂອງໂລກ ທີ່ມີຄວາມໄວໃນການດາວໂຫຼດ ໃນ ລະບົບອິນເຕີເນັດ Broadband. ສຳລັບລະບົບອິນເຕີເນັດ ເທິງມືຖື ສປປ ລາວ ຖືກຈັດເປັນອັນດັບໃນອັນດັບທີ 6 ໃນ ພາກພື້ນອາຊຽນ ແລະ ອັນດັບ 96 ຂອງໂລກ ໃນຄວາມໄວ 20.48 Mbps (ASEAN Information Center, 2021). ໂດຍອີງຕາມການສຳຫລວດ ແລະ ປຽບທຽບມູນຄ່າ ການໃຊ້ຈ່າຍສຳລັບການນຳໃຊ້ອິນເຕີເນັດລາຍເດືອນ ໂດຍ ສະເລ່ຍ ໃນຈຳນວນ 211 ປະເທດ ແລະ ເຂດປົກຄອງຕົນເອງ ທົ່ວໂລກ ພ້ອມທັງທຽບໃສ່ບັນດາປະເທດອາຊຽນພາກພື້ນ ເຫັນໄດ້ວ່າ ສປປ ລາວ ແມ່ນຍັງມີຄ່າໃຊ້ຈ່າຍໃນລະດັບທີ່ສູງຢູ່. ໃນບັນດາປະເທດພາກພື້ນ ສສ ຫວຽດນາມ ແລະ ສປ ຈີນ ຖືກ ຈັດໃນກຸ່ມທີ່ມີຄ່າໃຊ້ຈ່າຍສຳລັບອິນເຕີເນັດຖືກທີ່ສຸດ ໃນ ຂົງເຂດນີ້ (ASEAN Main Portal, 2021) ອີກດ້ານໜຶ່ງທີ່ ເປັນຄວາມຫຍຸ້ງຍາກ ແລະ ຖ່ວງດຶງການຂະຫຍາຍ ຕົວໃນການ ພັດທະນາ, ຫັນໄປສູ່ການບໍລິຫານລັດເອເລັກໂຕຼນິກ ຂອງ ສປປ ລາວ ແມ່ນຄວາມອາດສາມາດໃນການສ້າງ ແລະ ພັດທະນາລະບົບໂປຣແກຣມ, ການສ້າງສື່ຂໍ້ມູນຂ່າວສານ, ຄາ ແນະນຳອອນລາຍເປັນເນື້ອໃນພາສາລາວ ທີ່ຖືເປັນພາສາທາງ ລັດຖະການ. ສິ່ງດັ່ງກ່າວ ແມ່ນໄດ້ເປັນສິ່ງຈຳກັດການເຂົ້າເຖິງ ຂອງປະຊາຊົນລາວ ໃນການບໍລິການຕ່າງໆ ຂອງລັດຖະບານ ຜ່ານລະບົບອອນລາຍ.

2. ຂາດຄວາມສົມດຸນ, ຕໍ່ເນື່ອງ ແລະ ຈຸດສຸ່ມໃນການ ພັດທະນາເວັບໄຊ ແລະ ພື້ນຖານໂຄງລ່າງການບໍລິຫານລັດເອ ເລັກໂຕຼນິກ.

ບັນດາອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນຈຳນວນ ໜຶ່ງ ໄດ້ມີການພັດ ທະນາເວັບເວັບໄຊ ພາກສ່ວນຂອງຕົນເອງ ຂຶ້ນມາ ເພື່ອກຽມພ້ອມຫັນເປັນທັນສະໄໝ ຕາມທິດການ ພັດທະນາ ລະບົບການບໍລິຫານລັດເອເລັກໂຕຼນິກ ຖືເປັນ ພື້ນຖານສຳຄັນໃຫ້ແກ່ການສ້າງຖານຂໍ້ມູນທີ່ອຸດົມສົມບູນ ເພື່ອ ເຊື່ອມຍົງເຂົ້າກັນເປັນຖານຂໍ້ ມູນແຫ່ງຊາດໃນຕໍ່ໜ້າ ແຕ່ ໂດຍລວມຍັງເຫັນວ່າ ການພັດທະນາ ແລະ ປັບປຸງເວັບໄຊ ຂອງ ແຕ່ລະພາກສ່ວນນັ້ນ ແມ່ນຍັງຂາດຈຸດສຸ່ມ, ຈຸດປະສົງ ແລະ ແຜນທີ່ ເປັນ ຍຸ ທະ ສາ ດ ທີ່ ຍຶ ນ ຍົ ງ ເອ ກ ະ ພາ ບ ກັ ນ ສ ່ ວ ນ ຫລວງຫລາຍແມ່ນໄດ້ປັບປຸງ ແລະ ພັດທະນາໄປຕາມຂະບວນ ການ ແລະ ສະພາບແວດລ້ອມ ການສະໜັບສະໜູນ ຂອງ ບັນດາໂຄງການຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ; ເມື່ອ ມີໂຄງການສະໜັບສະໜູນ ກໍ່ມີການເຄື່ອນໄຫວ ເມື່ອໂຄງການ ພັດທະນາດັ່ງກ່າວໄດ້ສິ້ນສຸດ ລະບົບການພັດທະນາ, ປັບປຸງ,

ຮັກສາເຄື່ອງມືອຸປະກອນ ກໍ່ຢຸດສະຫງັກ ຫລື ເຄື່ອນໄຫວໄປ ແບບຊັກຊ້າຕາມມີຕາມເກີດ. ໃນກໍລະນີຂອງໂຄງການບໍລິຫານ ລັດເອເລັກໂຕຼນິກ ຂອງ ສປປ ລາວ, ລັດຖະບານ ໄດ້ລົງທຶນ ຈຳນວນມະຫາສານ ເພື່ອເຊື່ອມເຄືອຂ່າຍອິນເຕີເນັດ, ຕິດຕັ້ງ ລະບົບການເຊື່ອມໂຍງຂໍ້ມູນຂ່າວສານ, ເຝິກອົບຮົມຍົກລະດັບ ພັດທະນາເວັບໄຊ ໃຫ້ແກ່ບັນດາກະຊວງ,ອົງການທີ່ສຳຄັນ ຂອງ ລັດຖະບານ. ພາຍຫລັງສຳເລັດແລ້ວ ໄດ້ມອບໃຫ້ພາກສ່ວນ ກົນກອງນັ້ນ ປົກປັກຮັກສາ, ນຳໃຊ້ ແລະ ພັດທະນາຕໍ່ໄປ ແຕ່ ສັງເກດເຫັນໄດ້ວ່າບາງພາກ ສ່ວນໄດ້ຖືເບົາ ເຮັດໃຫ້ພື້ນຖານ ໂຄງລ່າງເຫລົ່ານັ້ນ ບໍ່ຖືກນຳໃຊ້ຢ່າງມີປະສິດທິພາບ ຫລື ຖືກນຳ ໃຊ້ພື້ນຖານໂຄງລ່າງເຫລົ່ານັ້ນ ບໍ່ຖືກກັບຈຸດປະສົງໃນເບື້ອງຕົ້ນ; ເຮັດໃຫ້ວຽກງານການຍົກລະດັບຂີດຄວາມສາມາດ ການ ບໍລິຫານລັດເອເລັກໂຕຼນິກຊັກຊ້າລົງ. ນອກນັ້ນ ຍັງມີເວັບໄຊ ຂອງຫລາຍພາກສ່ວນ ຍັງຂາດຄວາມອຸດົມສົມບູນ ແລະຄວາມ ດຸນດ່ຽງໃນການປັບປຸງປ່ຽນແປງ ແລະ ປັບຕົວເຂົ້າກັບສະພາບ ການພັດທະນາຕົວຈິງຂອງປະເທດ, ພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນບໍ່ມີເນື້ອໃນຄົບຖ້ວນ, ຍັງເອື້ອຍອີງລະລົບພາສາ ຕ່າງປະເທດຫຼາຍກວ່າພາສາລາວ ເຮັດໃຫ້ມີຄວາມຫຍຸ້ງຍາກ ສຳລັບປະຊາ ຊົນລາວຄົນທົ່ວໄປ ທີ່ມີຈຸດປະສົ່ງນຳໃຊ້ ແລະ ເຂົ້າຮັບການບໍລິການຈາກອົງການຈັດ ຕັ້ງລັດ ຜ່ານລະບົບອອນ ລາຍ ມີຄວາມຫຍຸ້ງຍາກ, ສັບສົນ ແລະ ມີຫລາຍຂັ້ນຕອນ.

3. ການພັດທະນາຊັບພະຍາກອນ ສາລັບການບໍລິຫານ ລັດເອເລັກໂຕຼນິກ ຍັງຢູ່ໃນຂອບເຂດຈຳກັດ.

ລະດັບຄວາມຮູ້, ຄວາມອາດສາມາດ ແລະ ຄວາມ ຊ່ຽວຊານດ້ານໄອຊີທີ ທີ່ເຮັດໜ້າທີ່ສະເພາະດ້ານການພັດທະນາ , ຄຸ້ມຄອງການບໍລິຫານລັດທັນສະໄໝ ຂອງແຕ່ລະພາກສ່ວນ ໂດຍສະເພາະບັນດາອົງການຈັດຕັ້ງຂັ້ນສູນກາງ, ທ້ອງຖິ່ນ ເປົ້າ ໝາຍໃນການພັດທະນາ ແລະ ເສີມຂະຫຍາຍການບໍລິຫານ ລັດເອເລັກໂຕຼນິກ ຍັງມີລັກສະນະຈຳກັດທາງດ້ານຄຸນນະພາບ ແລະ ປະລິມານ ເຊິ່ງສະແດງອອກໃນບັນດາໜ່ວຍງານການຄຸ້ມ ຄອງການບໍລິຫານລັດເອເລັກໂຕຼນິກ ພະນັກງານລັດຖະກອນ ຈຳນວນຫລາຍ ແມ່ນບໍ່ໄດ້ມີລະດັບວິຊາສະເພາະດ້ານນີ້ ແຕ່ ຖືກແຕ່ງຕັ້ງມອບໝາຍໃຫ້ຮັບຜິດຊອບພາຍໃນອົງການນັ້ນ, ສຳລັບພະນັກງານ - ລັດຖະກອນຈຳນວນໜຶ່ງ ຮຽນຈົບວິຊາສະ ເພາະກ່ຽວຂ້ອງກັບດ້ານນີ້ສະເພາະ ແຕ່ຍັງບໍ່ທັນສາມາດຈັດຕັ້ງ ຜັນຂະຫຍາຍວິຊາສະ ເພາະຂອງຕົນເອງ ເຊັ່ນ: ການຂຽນໂປຣ ແກຣມ, ການພັດທະນາລະບົບແອັບອັບຟລິກເຄເຊິນ, ການ ພັດທະນາເວັບໄຊ, ການປົກປັກຮັກສາລະບົບຮັກສາຄວາມ ປອດໄພ ໃນລະບົບອອນລາຍ ແລະອື່ນໆ ເນື່ອງຈາກຫລາຍປັດ ໄຈລວມ ທັງປັດໄຈພາຍໃນ ແລະນອກຕົວຈຳນວນໜຶ່ງ ເປັນຕົ້ນແມ່ນຄວາມຮູ້ບໍ່ທັນເລິກເຊິ່ງ, ຂາດປະສົບການໃນການ ຈັດຕັ້ງປະຕິບັດຕົວຈິງ, ຂາດເຂີນປັດໄຈການສະໜັບສະໜູນ, ຄວາມອາດສາມາດດ້ານພາສາຕ່າງປະເທດບໍ່ສູງ ແລະອື່ນໆ. ໃນ ວິໄສທັດ 30 ປີ ຂອງແຜນການພັດທະນາຂອງກະຊວງໄປຊະນິ , ໂທລະຄົມມະນາຄົມ ແລະການສື່ສານ ໄດ້ຍົກໃຫ້ເຫັນວ່າ “ສາເຫດຂອງບັນຫາຄົງຄ້າງຕົ້ນຕໍ ໃນການພັດທະນາຂະແໜ ງໄອຊີທີ ຢູ່ປະເທດເຮົາ ແມ່ນຍ້ອນພະນັກງານວິຊາການດ້ານໄອ ຊີທີ ຍັງບໍ່ທັນພຽງພໍທາງດ້ານປະລິມານ ແລະ ຄຸນນະພາບ ທັງ ໃນພາກສ່ວນສູນກາງ ແລະ ທ້ອງຖິ່ນ (ກະຊວງເຕັກໂນໂລຊີ ແລະການສື່ສານ, 2015, ໜ້າ 5). ອີກປັດໄຈໜຶ່ງທີ່ສຳຄັນ ທີ່ ຈຳກັດປະສິດທິພາບ ແລະ ການຂະຫຍາຍຕົວ ຂອງການ ບໍລິຫານລັດເອເລັກໂຕຼນິກ ນັ້ນກໍ່ຄືຄວາມອາດສາມາດ ແລະ ຄວາມຮັບຮູ້ ຂອງປະຊາຊົນພົນລະເມືອງລາວ ໃນດ້ານການນຳ ໃຊ້ລະບົບເອເລັກໂຕຼນິກ, ເຄື່ອງມືໄອຊີທີ ແລະ ເຄື່ອງມືທັນ ສະໄໝຕ່າງໆ ຍັງຢູ່ໃນລະດັບຕ່ຳ ແລະ ຢູ່ໃນຂອບເຂດຈຳກັດ ເປັນຕົ້ນແມ່ນຄວາມຮູ້, ຄວາມສາມາດ ຂອງປະ ຊາຊົນ ໃນການ ນຳໃຊ້ລະບົບຄອມພິວເຕີ, ລະບົບແອັບ, ຄວາມຮູ້ຄວາມ ສາມາດທາງດ້ານພາສາລາວ, ພາສາຕ່າງປະເທດ ແລະ ການຮັບ ບໍລິການລະບົບອອນລາຍຕ່າງໆ ຂອງລັດຖະບານ. ບັນດາສິ່ງ ດັ່ງກ່າວນີ້ ແມ່ນສະທ້ອນໃຫ້ເຫັນໄດ້ໂດຍຜ່ານຕົວຊີ້ວັດ ທີ່ ສຳຄັນເປັນຕົ້ນແມ່ນ ອັດຕາການຮູ້ໜັງສືຂອງ ສປປ ລາວ ແມ່ນ ຢູ່ໃນລະດັບທີ່ບໍ່ທັນສູງ ແລະ ປະຊາກອນສ່ວນໃຫຍ່ຂອງ ປະເທດ ແມ່ນຍັງກະແຈກກະຈາຍຢູ່ເຂດຊົນນະ ບົດ ເນື່ອງຈາກ ຕິດພັນກັບເງື່ອນໄຂທາງດ້ານອາຊີບ ເຊິ່ງມີຄວາມຫຍຸ້ງຍາກທີ່ ຈະຫັນໄປສູ່ການບໍລິຫານ, ຄຸ້ມຄອງລັດທີ່ທັນສະໄໝໄດ້. ນອກ ນັ້ນ ຄວາມຮູ້ດ້ານລະບົບ ຂໍ້ມູນຂ່າວສານແຫ່ງຍຸກສະໄໝ ກໍ່ຍັງ ບໍ່ທັນເລິກເຊິ່ງເຖິງຖອງ ແລະ ທ່ວງທັນກັບສະພາບການ ພັດທະນາ ຂອງໂລກໃນປັດຈຸບັນ.

4. ລະດັບຂີດຄວາມສາມາດ ໃນລະບົບຄວາມປອດໄພ ການບໍລິຫານລັດເອເລັກໂຕນິກ ຍັງບໍ່ທັນສູງ.

ບັນຫາຄວາມປອດໄພໃນການນຳໃຊ້ ແລະ ຮັບການ ບໍລິການຜ່ານລະບົບເອເລັກ ໂຕນິກຈາກລັດ ຍັງຖືໄດ້ວ່າເປັນ ປັດໄຈທີ່ສຳຄັນໜຶ່ງ ໃນການກີດໜ່ວງຖ່ວງດຶງລະດັບການ ຂະຫຍາຍ ແລະ ການພັດທະນາ ຂອງການບໍລິຫານລັດດ້ວຍເອ ເລັກໂຕນິກ ເຊິ່ງບັນຫາດ້ານຄວາມປອດໄພນັ້ນ ໄດ້ເປັນປັດໄຈ ພື້ນຖານ ເພື່ອຮັບປະກັນການພັດທະນາ ແລະ ຄົງຕົວ ຂອງການ ບໍລິຫານລັດເອເລັກໂຕນິກ ເນື່ອງຈາກວ່າບັນຫາຄວາມປອດໄພ ໄດ້ເປັນໄພຂົ່ມຂູ່ໂດຍກົງ ຕໍ່ກັບການມີສ່ວນຮ່ວມໃນການ ພັດທະນາ ແລະ ນຳໃຊ້ການ ບໍລິການລັດຜ່ານລະບົບອອນລາຍ ຂອງມະຫາຊົນ. ໃນໄລຍະຜ່ານມາ ໃນຂະບວນການພັດທະນາ ການບໍລິຫານລັດລະບົບເອເລັກໂຕນິກ ຂອງ ສປປ ລາວ ກໍ່ໄດ້ ມີຄວາມພະຍາ ຍາມເຈາະເຂົ້າລະບົບຖານຂໍ້ມູນ, ລະບົບກວດ ການເຮັດວຽກ ຂອງລະບົບຄອມພິວເຕີພາກລັດ ແລະ ຫົວ ໜ່ວຍທຸລະກິດ, ລະບົບການຄຸ້ມຄອງອັດຕະໂນມັດ ໃນການ ໃຫ້ບໍລິການ ແລະ ເຮັດໃຫ້ການດຳເນີນງານ ຂອງລະບົບຕ່າງໆ ເກີດຂໍ້ຜິດພາດ, ການປ່ອຍໄວຣັດຄອມພິວເຕີ ເພື່ອທຳລາຍຂໍ້ ມູນ ຫລື ລ໊ອກຂໍ້ມູນທີ່ຖືກປ້ອນເຂົ້າໃນລະບົບ ຄອມພິວເຕີ ຫລື ການກໍ່ກວນໃນລັກສະນະຊອນເຊື່ອ ເພື່ອຫວັງທຳລາຍ ພາບພົດ ແລະ ຄວາມໜ້າເຊື່ອຖື ຂອງການບໍລິຫານລັດແບບໃ ໝ່ນີ້ ເຊິ່ງບັນດາປາກົດການຕ່າງໆທີ່ກ່າວມານັ້ນ ແມ່ນໄດ້ມີທ່າ ອ່ຽງເກີດຂຶ້ນ ພ້ອມທັງເພີ່ມທະວີຄວາມຮຸນແຮງ ແລະຄວາມຖີ່ ຂຶ້ນເລື້ອຍໆ.

IV. ວິທີການບໍລິຫານລັດເອເລັກໂຕນິກ ໃນຕໍ່ໜ້າ

ເພື່ອຮັບປະກັນການພັດທະນາ ແລະ ປັບການບໍລິຫານ ລັດເອເລັກໂຕນິກ ຢູ ສປປ ລາວ ໃຫ້ມີຄວາມໜັກແໜ້ນ ເຂັ້ມແຂງ ແລະ ທັນກັບສະພາບການປ່ຽນແປງຢ່າງໄວວາ ຂອງ ພາກພື້ນ ແລະ ສາກົນນັ້ນ ມັນມີຄວາມຈຳເປັ ຢ່າງຍິ່ງໃນ ການຈັດຕັ້ງປະຕິ ບັດບັນດາມາດຕະການ, ລະບຽບກົດໝາຍ, ແຜນຍຸທະສາດ ແລະ ໂຄງການແມ່ບົດ ທີ່ສຳຄັນໃນການປັບປຸງ , ພັດທະນາ, ຍົກລະດັບຂີດຄວາມສາມາດດ້ານການບໍລິຫານ ລັດເອເລັກໂຕນິກ ຂອງ ສປປ ລາວ ໃຫ້ກ້າວສູ່ລວງເລິກ ແລະ ພັດທະນາແບບກ້າວກະໂດດ ດ້ວຍບາດກ້າວທີ່ໜັກແໜ້ນ ເຂັ້ມແຂງນັ້ນ ທຸກພາກສ່ວນທີ່ມີບົດບາດສຳຄັນຕົ້ນຕໍຕັດສິນຕໍ່ ຜົນສຳເລັດ ຂອງການບໍລິຫານລັດເອເລັກໂຕນິກ ຄວນເຮັດໜ້າ ທີ່ບົດ ບາດນຳໜ້າໃນການປະຕິຮູບທີ່ເປັນຍຸທະສາດ 4 ດ້ານ ຕົ້ນຕໍ ດັ່ງຕໍ່ໄປນີ້:

1. ສ້າງ ແລະ ເຊື່ອມຊຶມວິໄສທັດການບໍລິຫານລັດເອ ເລັກໂຕນິກ ທີ່ທັນສະ ໄໝ.

ເດັດດ່ຽວຫັນເອົາວິໄສທັດ ການບໍລິຫານແບບໃໝ່ທີ່ທັນ ສະໄໝ ແລະ ການບໍລິຫານລັດເອເລັກໂຕນິກ ລົງສູ່ພະນັກງານ - ລັດຖະກອນໃນທຸກຂັ້ນ ເພື່ອເຊື່ອມຊຶມ,ຮັບຮູ້, ເຂົ້າໃຈຢ່າງ ເຖິງຖອງ, ມີວິໄສທັດ ແລະ ມີການຕອບຮັບທີ່ດີຂຶ້ນ ຕໍ່ກັບການ ບໍລິ ຫານລັດເອເລັກໂຕນິກ. ປັດໄຈດັ່ງກ່າວນີ້ ແມ່ນມີບົດບາດ ສຳຄັນ ທັງເປັນກົນໄກຊຸກດັນ ແລະ ເປັນກຳລັງແຮງຂັບເຄື່ອນ ທີ່ດີທີ່ສຸດສຳລັບການປັບປຸງ ແລະ ການພັດທະນາ ການບໍລິຫານ ລັດເອເລັກໂຕນິກ ໃຫ້ກ້າວກະໂດດດ້ວຍບາດກ້າວທີ່ໜັກແໜ້ນ , ຕີຕ້ານແນວຄິດຮັກສາເດີມ, ບໍ່ມັກການຫັນປ່ຽນ, ຍຶດຕິດຮູບ ແບບວິທີການເຮັດວຽກເດີມໆ ເຊິ່ງສິ່ງດັ່ງກ່າວ ເປັນອຸປະສັກ ກີດຂວາງຢ່າງຫລີກລ່ຽງບໍ່ໄດ້ ຕໍ່ກັບການຫັນໄປສູ່ການບໍ ລິຫານ ລັດທີ່ທັນສະໄໝ ທີ່ມີຄວາມຈຳເປັນໃນການໝູນໃຊ້ຜົນສຳເລັດ ຂອງວິທະຍາ ສາດ ແລະ ເຕັກໂນໂລຊີທີ່ທັນສະໄໝ ເພື່ອ ຮັບປະກັນສາມາດໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ໄດ້. ດັ່ງຄຳເຫັນຂອງທ່ານນາຍົກລັດຖະມົນຕີ ທີ່ໄດ້ກ່າວໃນ ກອງປະຊຸມສະພາແຫ່ງຊາດ ຄັ້ງປະຖົມມະລຶກ ຊຸດທີ IX ວ່າ “ຫັນປ່ຽນແນວຄິດໃໝ່ ນຳໃຊ້ວິທີການໃໝ່ ເພື່ອໃຫ້ໄດ້ຜົນ ອັນໃໝ່ທີ່ດີກວ່າເກົ່າ” (ສະພາແຫ່ງຊາດ, 2021). ດັ່ງນັ້ນ ການ ຫັນປ່ຽນແນວຄິດຂອງບັນດາພະນັກງານ - ລັດຖະກອນ ທີ່ເປັນ ປັດໄຈສຳຄັນໃນການຂັບເຄື່ອນ ໃນການພັດທະນາການ ບໍລິຫານລັດເອເລັກໂຕນິກນັ້ນ ຄວນໄດ້ຮັບບຸລິມະສິດພິເສດ ກວ່າໝູ່ ໃນການດຳເນີນການຫັນປ່ຽນໄປສູ່ການບໍລິຫານລັດ ທີ່ ທັນສະໄໝແບບໃໝ່ທີ່ສາມາດນຳໃຊ້ເຄື່ອງມືທັນສະໄໝອັນໃ ໝ່ ເພື່ອຈຸດປະສົງໃຫ້ບັນລຸໝາກຜົນອັນໃໝ່ ທີ່ຍິ່ງໃຫຍ່ກວ່າ ເກົ່າ ໃນການບໍລິຫານລັດ ຂອງປະເທດເຮົາ

2. ພັດທະນາ ແລະ ປັບປຸງໂຄງລ່າງພື້ນຖານ ທີ່ຈຳເປັນ ສຳລັບການບໍລິຫານລັດເອເລັກໂຕນິກ.

ຮີບຮ້ອນສຸ່ມໃສ່ການຍົກລະດັບຂີດຄວາມສາມາດ ຂອງ ບັນດາພື້ນຖານໂຄງລ່າງທີ່ຈຳເປັນທີ່ມີຢູ່ແລ້ວ ພ້ອມທັງປັບປຸງ ແລະ ພັດທະນາເວັບໄຊ ຂອງບັນດາພາກ ສ່ວນບຸລິມະສິດ ຂອງ ລັດຖະບານ ໃນການຫັນເປັນທັນສະໄໝ ເປັນຕົ້ນແມ່ນຂະແໜ ງ ການພົວພັນຕ່າງປະເທດ, ຂະແໜງການເກັບກາລາຍຮັບແຫ່ງ ຊາດ ຂອງລັດຖະບານ, ຂະແໜງການສາທາລະນະສຸກ, ຂະແໜ ງການປົກຄອງຂອງລັດຖະບານ. ພ້ອມນັ້ນ ການົດເປັນ ມາດຕະຖານລວມດຽວກັນ ໃນການປັບປຸງ ແລະ ພັດທະນາ ເວັບໄຊ ຂອງແຕ່ລະພາກສ່ວນນັ້ນ ເພື່ອເປັນການວາງພື້ນຖານ ໂຄງລ່າງ ທີ່ສາມາດເຊື່ອມໂຍງບັນດາເວັບໄຊ ຂອງແຕ່ລະ ພາກສ່ວນເຫລົ່ານັ້ນ ເປັນຖານຂໍ້ມູນແຫ່ງຊາດ ຫລື ເອີ້ນວ່າ ປະຕູຂໍ້ມູນແຫ່ງຊາດໃນອະນາຄົດ. ອີກປັດໄຈໜຶ່ງທີ່ສຳຄັນ ຄື ການຍົກລະດັບຂີດຄວາມສາມາດ ຂອງແຕ່ລະພາກສ່ວນໃນ ການຂຽນເວັບໄຊ ທີ່ເປັນລະບົບເນື້ອໃນ ແລະ ຄຳສັ່ງຕ່າງໆ ໃນ ໜ້າເວັບໄຊເປັນພາສາລາວ ຫລື ສອງພາສາຄູ່ຂະໜານກັນ ໂດຍ ເນັ້ນໃສ່ຈຸດ ປະສົງທີ່ວ່າ **“ວ່ອງໄວ ກະທັດຮັດ ແລະ ເຂົ້າໃຈ ງ່າຍດາຍ ໃນການນຳ ໃຊ້ຕົວຈິງ”.** ຖ້າເຮັດໄດ້ແນວນັ້ນ ຈຶ່ງຈະ ສາມາດດຶງດູດຄວາມສົນໃຈ ຂອງປະຊາຊົນພົນລະເມືອງ ໃນ ການບໍລິໂພກຂໍ້ມູນ - ຂ່າວສານ ແລະ ນຳໃຊ້ບໍລິການ ຂອງພາກ ລັດຜ່ານລະບົບອອນລາຍ ເຊິ່ງເປັນຕົວຊີ້ວັດໜຶ່ງທີ່ສຳຄັນ ໃນ ລະດັບການພັດທະນາການບໍລິຫານລັດເອເລັກໂຕນິກ. ນອກຈາກນີ້ ໃນການຍົກລະດັບ ປັບປຸງ ແລະ ພັດທະນາໂຄງ ລ່າງພື້ນຖານ ການບໍລິຫານລັດເອເລັກໂຕນິກ ຄວນມີຄວາມ ສະດຸ້ງໄວຕໍ່ສະພາບການພັດທະນາ ໃນຂະແໜງການດັ່ງກ່າວ ທີ່ ເກີດຂຶ້ນຢູ່ໃນພາກພື້ນ ແລະ ສາກົນ ນັ້ນໝາຍຄວາມວ່າ ມີ ຄວາມຈຳເປັນຢ່າງຍິ່ງ ໃນການເສີມຂະຫຍາຍການຮ່ວມມື ກັບ ບັນດາປະເທດເພື່ອນມິດ ແລະ ບັນດາອົງການຈັດຕັ້ງສາກົນ ເພື່ອຍົກລະດັບຂີດຄວາມສາມາດຂອງພື້ນຖານໂຄງລ່າງ ຂອງ ພວກເຮົາ ໃຫ້ມີຄວາມອາດສາມາດໃນການເຊື່ອມໂຍງ ກັບ ບັນດາປະ ເທດພາກພື້ນ ແລະ ສາກົນໄດ້ ໄປຕາມທິດທາງ 3 ເປີດ ຂອງທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນະ ບໍລິຫານງານສູນກາງພັກ ສະໄໝທີ XI ທີ່ໄດ້ກ່າວຕໍ່ກອງປະຊຸມ ສະໄໝສາມັນ ເທື່ອທີ 4 ຊຸດທີ VIII ຂອງສະພາແຫ່ງຊາດວ່າ “ພວກເຮົາຄວນເປີດປະຕູ, ເປີດສິ່ງກີດຂວາງ ແລະ ເປີດໃຈໃນ ການພົວພັນຮ່ວມມືກັບຕ່າງປະເທດ” (ລັດຖະບານແຫ່ງ ສປປ ລາວ, 2017). ຖ້າເຮັດໄດ້ຄືແນວນັ້ນ ເຊື່ອແນ່ວ່າ ການ ພັດທະນາພື້ນຖານໂຄງລ່າງ ການບໍລິ ຫານລັດເອເລັກໂຕນິກ ຈະມີການເຕີບໃຫຍ່ຂະຫຍາຍຕົວໄດ້ຢ່າງວ່ອງໄວ ແລະ ທຽບ ທັນກັບບັນດາປະເທດພາກພື້ນ ຄ່ຽງຄູ່ກັບການໄດ້ຮັບການສະ ໜັບສະໜູນທາງດ້ານເຕັກນິກ, ວິທະຍາສາດຕ່າງໆ ຈາກບັນດາ ຄູ່ຮ່ວມມືຍຸດທະສາດ ແລະ ເພື່ອນມິດສາກົນ ໃນຂະແໜງການ ດັ່ງກ່າວ ກໍ່ ຈະຂະຫຍາຍຕົວອອກ ແລະ ເພີ່ ມສູງຂຶ້ນຢ່າງ ແນ່ນອນ.

3. ບຳລຸງ - ກໍ່ສ້າງຊັບພະຍາກອນມະນຸດ ສາລັບການ ບໍລິຫານລັດເອເລັກໂຕນິກ ຢ່າງມີແບບແຜນຍຸດທະສາດ.

ປະຕິຮູບແບບແຜນການບຳລຸງ - ກໍ່ສ້າງບຸກຄະລາກອນ ແລະ ປະຊາກອນດີຈີຕອນ ໃຫ້ມີລັກສະນະເປັນແຜນຍຸດທະ ສາດຕໍ່ເນື່ອງ, ຍາວນານ ໂດຍການຫັນແຜນ ການບຳລຸງ - ກໍ່ສ້າງ ບຸກຄະລະກອນ ໃຫ້ກ້າວສູ່ລວງເລິກ, ເປັນຈຸດສຸມຍຸດທະສາດ ລົງເລິກສະເພາະດ້ານ ແລ້ວກ້າວໄປສູ່ການສ້າງເປັນຊ່ຽວຊານ ດ້ານການບໍລິຫານລັດເອເລັກໂຕນິກທີ່ທັນສະໄໝ; ພ້ອມນັ້ນ ເພີ່ມທະວີການຮ່ວມມືແລກປ່ຽນຂໍ້ມູນຂ່າວສານ, ຍາດແຍ່ງເອົາ ການຊ່ວຍເຫລືອດ້ານການພັດທະນາຊັບພະຍາກອນມະນຸດ ກັບບັນດາປະເທດ ທີ່ສາມາດເຮັດການບໍລິຫານລັດເອເລັກໂຕ ນິກໄດ້ດີ ເປັນຕົ້ນແມ່ນ ສິງກະໂປ, ເກົາຫລີໃຕ້, ຈີນ ແລະ ຍີ່ປຸ່ນ ເຂົ້າຊ່ວຍໃນການກໍ່ສ້າງ - ບຳລຸງບຸກຄະລາກອນໃນດ້ານ ນີ້ ເພື່ອເປັນກຳລັງແຮງຊຸກດັນ, ຮັບປະກັນໃຫ້ແກ່ແນວທາງ ການພັດທະນາຊັບພະຍາ ກອນມະນຸດທີ່ໄດ້ລະບຸໄວ້ ໃນບົດ ລາຍງານການເມືອງ ຂອງຄະນະບໍລິຫານງານສູນກາງພັກ ສະໄ ໝທີ X ທີ່ໄດ້ລະບຸວ່າ “ສ້າງຊັບພະຍາກອນມະນຸດ ທີ່ສາມາດ ຄົ້ນຄວ້າປະດິດສ້າງ ແລະ ເປັນເຈົ້າການຄົ້ນຄວ້າວິທະຍາສາດ ເຕັກໂນໂລຊີທີ່ທັນສະ ໄໝ” (ວາລະສານອາລຸນໃໝ່, 2021) ຄຽງຄູ່ກັບການສ້າງບຸກຄະລະກອນດີຈີຕອນ ທີ່ຊ່ຽວຊານແລ້ວ ອີກວຽກງານໜຶ່ງທີ່ປະບໍ່ໄດ້ກໍ່ຄືການສ້າງແຜນພັດທະນາ, ບຳລຸງ - ກໍ່ສ້າງພົນລະເມືອງດີຈີຕອນເຊັ່ນດຽວກັນ ໃຫ້ມີລັກສະນະຕໍ່ ເນື່ອງລຽນຕິດ, ຍາວນານ ແລະ ມີຈຸດສຸ່ມທີ່ຊັດເຈນ ໂດຍຜ່ານ ຂະບວນການໂຄສະນາເຜີຍແຜ, ຝຶກອົບຮົມ, ສາທິດສຶກສາ, ທັດສະນະສຶກສາ ແລະທົດລອງໃຊ້ຕົວຈິງໃນການບໍລິການອອນ

ລາຍ ແລະ ການເຂົ້າສູ່ຖານຂໍ້ມູນລະບົບແຫລ່ງຂໍ້ມູນຂ່າວສານ ຂອງພາກລັດ ແລະ ຫົວໜ່ວຍທຸລະກິດ.

4. ປັບປຸງ, ຍົກລະດັບຂີດຄວາມສາມາດດ້ານຄວາມປອດໄພ ໃນການບໍລິຫານລັດເອເລັກໂຕຼນິກ.

ຍົກສູງບຸລິມະສິດ ໃຫ້ແກ່ການປັບປຸງມາດຕະຖານດ້ານຄວາມປອດໄພ ຂອງລະ ບົບການບໍລິຫານລັດເອເລັກໂຕຼນິກ ເປັນມາດຕະຖານໜຶ່ງທີ່ສຳຄັນ ໃນລະບົບຄວາມໝັ້ນຄົງຂອງຊາດ ເພື່ອໃຫ້ກາຍເປັນມາດຕະຖານຄວາມປອດໄພລະດັບອະນຸພາກພື້ນ ແລະ ສາກົນ ທັງຮັບປະກັນຄວາມປອດໄພດ້ານເຕັກນິກ, ການນຳໃຊ້ລະບົບໄອຊີທີ ແລະ ການບໍລິການອອນລາຍຂອງລັດຖະບານ ໂດຍເນັ້ນໜັກໃສ່ຜົນປະໂຫຍດ, ຄວາມໝັ້ນຄົງ ແລະ ປອດໄພຂອງເຄືອຂ່າຍລະບົບການບໍລິຫານລັດເອເລກໂຕຼນິກ, ຂໍ້ມູນຂ່າວສານຜ່ານອິນເຕີເນັດ, ຄວາມປອດໄພຈາກການໂຈມຕີທາງໄຊເບີ ແລະ ສາມາດເຊື່ອມໂຍງກັບສາກົນ ເພື່ອຮັບການແຈ້ງເຕືອນເຖິງໄພອັນຕະລາຍ ທາງລະບົບອິນເຕີເນັດ. ນອກຈາກນີ້ ຍັງມີຄວາມຈຳເປັນໃນການເພີ່ມຄວາມເຂັ້ມງວດຫລາຍຂຶ້ນ ໃນການຈັດຕັ້ງປະຕິບັດມາດຕະການປ້ອງກັນ ແລະ ດັບສູນໄພຂົ່ມຂູ່ທາງໄຊເວີ ທີ່ອາດຈະເກີດຂຶ້ນຕັ້ງແຕ່ຫົວທີ ເປັນຕົ້ນແມ່ນການກວດກາ, ຢັ້ງຢືນ ແລະ ຂຶ້ນທະບຽນ ບັນດາ ອຸປະກອນການສື່ສານເອເລັກໂຕຼນິກ, ຊອບແວ ແລະ ອຸປະກອນໄອຊີທີ ກ່ອນນຳເຂົ້າປະເທດທຸກຄັ້ງ, ຕິດຕາມ, ກວດກາ, ປ້ອງກັນ ແລະ ປາບປາມຂະບວນການອາຊະຍາກຳໄຊເບີ, ແຮັກເກີທີ່ຜິດກົດໝາຍ ແລະອື່ນໆ.

ສັງລວມແລ້ວ ໃນເງື່ອນໄຂວິທະຍາສາດ ແລະ ເຕັກໂນໂລຊີ ທີ່ຂະຫຍາຍຕົວຢ່າງໄວວາຄືດັ່ງໃນປັດຈຸບັນນີ້ ການຫັນໄປສູ່ການບໍລິຫານລັດເອເລັກໂຕຼນິກ ອາດເປັນສິ່ງທີ່ຍາກຈະຫລີກລ່ຽງໄດ້ ໂດຍສະເພາະໃນເງື່ອນໄຂທີ່ປະເທດຕ່າງໆ ພວມເຄັ່ງຮ້ອນໃນການສຸ່ມທຸກກຳລັງແຮງ ແລະ ຂຸດຄົ້ນທ່າແຮງບໍ່ມ ຊ້ອນພາຍໃນຂອງຕົນ ເພື່ອແນ່ໃສ່ຍົກລະດັບຂີດຄວາມສາມາດ ໃນການພັດທະນາເສດຖະກິດ - ສັງຄົມ ປະເທດຕົນເອງ ໃຫ້ມີປະສິດທິພາບສູງສຸດ ເພື່ອຮັບປະກັນການເຊື່ອມໂຍງ ກັບບັນດາ ປະເທດພາກພື້ນ ແລະ ສາກົນ ໃນຍຸກແຫ່ງໂລກາພິວັດນີ້. ແຕ່ການທີ່ຈະຫັນໄປສູ່ການບໍລິຫານລັດທີ່ທັນສະໄໝ ຫລື ການບໍລິຫານລັດເອເລັກໂຕຼນິກນັ້ນ ກໍ່ບໍ່ໄດ້ເປັນເລື່ອງທີ່ງ່າຍດາຍ ທີ່ທຸກປະເທດຈະສາມາດຈັດຕັ້ງປະຕິບັດ ແລ້ວປະສົບຜົນສຳເລັດ ໃນຊ່ວງເວລາທີ່ແນ່ນອນໃດໜຶ່ງໄດ້; ເນື່ອງຈາກແຕ່ລະປະເທດ ມີຈຸດພິເສດ ແລະ ເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການພັດທະນາການບໍລິຫານລັດເອເລັກໂຕຼນິກ ທີ່ແຕກຕ່າງ ກັນ , ປະເຊີນສິ່ງທ້າທາຍ ແລະ ບັນຫາທີ່ແຕກຕ່າງກັນ, ມີກຳລັງ ແຮງ ແລະ ປັດໄຈຂັບເຄື່ອນການພັດທະນາທີ່ແຕກຕ່າງກັນ. ຍ້ອນແນວນັ້ນ ມີຄວາມຈຳເປັນຕ້ອງໄດ້ວິເຄາະວິໄຈຢ່າງມີໂລຊິກ ຂອງວິທະຍາສາດ, ການສຳຫລວດ, ທົດລອງ, ການດັດປັບ ຮູບແບບ ແລະ ວິທີການ ໃນການຫັນໄປສູ່ການບໍລິຫານລັດເອເລັກໂຕຼນິກ ທີ່ທັນສະໄໝນັ້ນ. ໃນກໍລະນີຂອງປະເທດເຮົາ ກໍ່ຕ້ອງໄດ້ປະເຊີນກັບສິ່ງທີ່ທ້າທາຍ ແລະ ສິ່ງກີດ ຂວາງຈຳນວນບໍ່ໜ້ອຍ ໃນການພັດທະນາ, ປັບປຸງບັນດາກົນໄກທີ່ສຳຄັນ ໃນການບໍລິຫານລັດເອເລັກໂຕຼນິກຢ່າງສົມບູນ ເປັນຕົ້ນແມ່ນ ພື້ນຖານໂຄງລ່າງ ທີ່ເປັນໝາກຫົວໃຈ ຂອງການບໍລິຫານລັດເອເລັກໂຕຼນິກ ທີ່ຍັງບໍ່ທັນສົມບູນແບບໃນການຮັບໃຊ້ ໃຫ້ແກ່ການບໍລິຫານລັດເອເລັກໂຕຼນິກ ຫລື ການບໍລິຫານລັດທີ່ທັນສະໄໝໄດ້, ດ້ານຊັບພະຍາກອນມະນຸດ ທີ່ຍັງມີກຳລັງອ່ອນ ນ້ອຍ, ຄຸນນະພາບຕ່ຳ ຍັງບໍ່ທັນເປັນເຈົ້າ ການໄດ້ໃນການປະດິດ ສ້າງ ແລະ ພັດທະນາລະບົບການບໍລິຫານລັດເອເລັກໂຕຼນິກໄດ້; ນອກນັ້ນ ຍັງມີປັດໄຈດ້ານຄວາມປອດໄພ ທີ່ຖືເປັນຈຸດສຳຄັນ ໃນຄວາມເຂັ້ມແຂງຂອງລະບົບການບໍລິຫານລັດແບບໃໝ່ນີ້.

ເຖິງແນວໃດກໍ່ຕາມ ຖ້າຫາກມີຄວາມມຸ່ງໝັ້ນ, ມີວິໄສທັດທີ່ຊັດເຈນ, ແຜນຍຸດທະສາດທີ່ລະອຽດ ແລະ ວິທີການທີ່ມີປະສິດຕິພາບ ໃນການຫັນເປັນການບໍລິຫານລັດທີ່ທັນສະໄໝແລ້ວ ເຊື່ອແນ່ວ່າການຫັນໄປສູ່ການບໍລິຫານລັດ ເອເລັກໂຕຼນິກ ຂອງປະເທດເຮົາ ຕ້ອງປະສົບຜົນສຳເລັດ ແລະ ມີທ່ວງທ່າການພັດທະນາໄວຂຶ້ນ ຢ່າງແນ່ ນອນ ເປັນຕົ້ນແມ່ນການສຸມທຸກກຳລັງແຮງ ເຂົ້າໃນການ ປະຕິຮູບດ້ານແນວຄິດຈິນຕະ ນາການໃໝ່ ໃນຍຸກແຫ່ງຂໍ້ມູນ ຂ່າວສານ, ນະວັດຕະກຳດ້ານເຕັກໂນໂລຊີຂະຫຍາຍຕົວ ຢ່າງໄວວາ ທີ່ບໍ່ເຄີຍມີມາກ່ອນ ໃນປະຫວັດສາດສັງຄົມມະນຸດ, ສັງລວມ ກຳລັງແຮງພາຍໃນ ແລະ ພາຍນອກ ເຂົ້າໃນການປັບປຸງຍົກລະດັບ ຂີດຄວາມສາມາດ ຂອງພື້ນ ຖານໂຄງລ່າງທີ່ເປັນໝາກຫົວໃຈ ຫລັກ ຂອງການບໍລິຫານລັດເອເລັກໂຕຼນິກ, ສ້າງແບບ ແຜນຍຸດ ທະສາດການບຳລຸງ - ກໍ່ສ້າງບຸກຄະລະກອນ ແລະ ພົນລະເມືອງດີ

ຈິຕອນທີ່ທັນສະໄໝ ໃຫ້ມີລັກສະນະເລິກເຊິ່ງ, ໜັກແໜ້ນ, ຍາວ ນານ ແລະ ຍົກລະດັບມາດຕະຖານຄວາມປອດໄພ ໃນການ ບໍລິຫານລັດເອເລັກໂຕຼນິກ ໃຫ້ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນໄດ້..

ເອກະສານອ້າງອີງ

ກະຊວງເຕັກໂນໂລຊີ ແລະການສື່ສານ. 2015. *ວິໄສທັດຮອດ 2030, ຍຸດທະສາດການພັດທະນາ ຂອງຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໄລຍະ 10 ປີ (2016-2025).* ກະຊວງເຕັກໂນໂລຊີ ແລະການສື່ສານ.

ກະຊວງໄປຊະນີ ແລະໂທລະຄົມມະນາຄົມ ແລະ ການສື່ສານ. 2016. *ສະພາບການພັດທະນາເອເລັກໂຕຼນິກ ຂອງ ສປປ ລາວ.* ກະຊວງໄປຊະນີ ແລະໂທລະຄົມມະນາຄົມ ແລະ ການສື່ສານ.

ກະຊວງໄປຊະນີ, ໂທລະຄົມມະນາຄົມ ແລະ ການສື່ສານ. 2018. *ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງໄປຊະນີ, ໂທລະຄົມມະນາຄົມ ແລະການສື່ສານ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສູນບໍລິຫານລັດດ້ວຍເອເລັກ ໂຕຣນິກ, (ສະບັບເລກທີ 3223/ປຕສ).*

ກະຊວງໄປຊະນີ, ໂທລະຄົມມະນາຄົມ ແລະ ການສື່ສານ. 2014*. ສະຖິຕິຂະແໜງການ ປທສ ປະຈຳປີ 2014*, ກະຊວງໄປ ຊະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ກະຊວງໄປຊະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.2019. *ສະຖິຕິຂະແໜ່ງການ ໄປຊະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ປະຈຳປີ 2019.* ກະຊວງໄປຊະນີ, ໂທລະ ຄົມມະນາຄົມ ແລະ ການສື່ສານ.

ກະຊວງເຕັກໂນໂລຊີ ແລະການສື່ສານ. (2021, 15 ມີຖຸນາ). *ເອກະສານນິຕິກຳ ເຜີຍແຜ່ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ*, ສືບຄົ້ນຈາກເວັບໄຊ້ https//:mpt.gov.la/index.php?r=site/ contents&id5=

ກອງປະຊຸມສຳມະນາວິທະຍາສາດ ກ່ຽວກັບນະໂຍບາຍແຫ່ງຊາດ ແລະໂຄງການເພື່ອສັງຄົມດີຈິຕອນ ຢູ່ອາຊີ. (2018). *ບົດ ສະເໜີ ກ່ຽວກັບ ການພັດທະນາລັດຖະບານເອເລັກໂຕຼນິກ ຂອງ ສປປ ລາວ ກອງປະຊຸມສຳມະນາວິທະຍາສາດ ກ່ຽວ ກັບນະໂຍບາຍແຫ່ງຊາດ ແລະໂຄງການເພື່ອສັງຄົມດີຈິ ຕອນ ຢູ່ອາຊີ ທີ່ປະເທດຍີ່ປຸ່ນປະຈຳ ປີ 2018.*

ສະພາແຫ່ງຊາດ. (2021, 24 ກໍລະກົດ). *ບົດຄຳເຫັນຂອງທ່ານ ນາຍົກລັດຖະມົນຕີ ຕໍ່ກອງປະຊຸມສະພາແຫ່ງຊາດ ຊຸດທີ IX ຄັ້ງປະຖົມມະລຶກ*, ຄົ້ນຫາຈາກເວັບໄຊ www.face book.com/watch/?ref=search&v 200279 = 701449115 &external_log_id=ea41ba6f-c4d64-ca390-cd-d25 d5e4cdad0&q =ຄຳເຫັນ ທ່ານນາຍົກລັດຖະມົນຕີ.

ສະພາແຫ່ງຊາດ. (2021, 30 ມີຖຸນາ). *ບັນດາກົດໝາຍ ແລະ ນິຕິກຳ.* ສືບຄົ້ນຈາກວັບໄຊ www.na.gov.la/index

ສູນລັດຖະບານເອເລັກໂຕຼນິກ. 2016*. ສະພາບການພັດທະນາ ລັດຖະບານເອເລັກໂຕຼນິກຂອງລາວ.* ກະຊວງໄປຊະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ລັດຖະບານແຫ່ງ ສປປ ລາວ. 2017. *ບົດລາຍງານຂອງ ລັດຖະບານຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຊຸດທີ VIII ຂອງສະພາແຫ່ງຊາດ (ສະບັບເລກທີ 136/ລບ).* ສຳນັກງານນາຍົກລັດຖະມົນຕີ.

ວາລະສານອາລຸນໃໝ່ 2011. *ເອກະສານ ກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ.* ໂຮງພິມແຫ່ງລັດ.

ວາລະສານອາລຸນໃໝ່. 2021. *ບົດລາຍງານການເມືອງ ຂອງ ຄະນະບໍລິຫານງານສູນກາງພັກ ສະໄໝທີ X ຕໍ່ກອງປະ ໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ*, ໂຮງພິມແຫ່ງລັດ.

ອົງການພັດທະນາສະຫະປະຊາຊາດ ປະຈຳລາວ. 2021.*ວຽກງານ ການຫັນເປັນລັດຖະບານ ດິຈິຕອນ.* ອົງການພັດທະນາ ສະຫະປະຊາຊາດ.

Aleisa, N. (2024). Key factors influencing the e-government adoption: a systematic literature

review. *Journal of Innovative Digital Transformation*, *1*(1), 14-31.

ASEAN Main Portal. (2021. 12th July). *Cheapest internet in the world :Country ranking*. Best Outdoor Travel Blog. Retrived from https//: www.atlasandboots.com/remote-work/countries-with-the-cheapest-internet-world/.

ASEAN Information Center. (2021, 12th July). *Internet Speed in ASEAN in 2020,* Retrived from www.aseanthai. net/english /mobiledetail-.php?cid14=&nid3499=.

David, O., & Ted, G. (1992). *Reinventing government: How the entrepreneurial spirit is transforming the public sector*, Addison-Wesley, ປີ 1992.

Grönlund, Å., & Horan, T. A. (2005). Introducing e-gov: history, definitions, and issues. *Communications of the association for information systems*, *15*(1), 713-729.

Ntulo, G., & Otike, J. (2013). E–government: Its role, importance and challenges. *School of Information Sciences. MoiUniversity*, *1*, 16.

Palvia, S. C. J., & Sharma, S. S. (2007, December). E-government and e-governance: definitions/domain framework and status around the world. In *International Conference on E-governance*, *5*(1), 1-12.

Sharma, S. K., & Gupta, J. N. (2003). Building blocks of an e-government: A framework. *Journal of Electronic Commerce in Organizations (JECO)*, *1*(4), 34-48.

Von Haldenwang, C. (2004). Electronic government (e-government) and development. *The European journal of development research*, *16*(2), 417-432.

United Nations (2005). *Government Global E-Government Readiness Report, From E-government to E-inclusion*. Department of Economic and Social Affairs, Division for Public Administration and Development Management. UN, New York.

United Nations. (2020, 12 December). *E-government development indicators in 2020.* Retrieved from https//:publicadministration .un.org/egovkb/en-us/Data/Compare-Countries.

United Nations (2024, December 14). *E-government assessment and knowledge*. United Nations E-government knowledgebase. https//:publicadmi nis tration un.org/egovkb/en-us/About/ UNeGov DD-Framework.